ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ 140 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 6 ສິງຫາ 2025

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍສາມັນສຶກສາ

- ອີງຕາມ ມາດຕາ 68 ຂໍ້ 1 ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 77/ສພຊ, ລົງວັນທີ 20 ເດືອນມີນາ ປີ 2025;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສາມັນສຶກສາ ສະບັບເລກທີ 159/ສພຊ, ລົງວັນ 4ທີ 25 ມິຖຸນາ 2025;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 37/ຄປຈ, ລົງວັນທີ 23 ກໍລະກົດ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍສາມັນສຶກສາ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 159 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 / 06 / 25

## ມະຕິ
## ກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສາມັນສຶກສາ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 77 /ສພຊ, ລົງວັນທີ 20 ເດືອນມີນາ ປີ 2025 ມາດຕາ 54 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 56 /ສພຊ, ລົງວັນທີ 28 ມິຖຸນາ 2024 ມາດຕາ 11 ຂໍ້ 1.

ພາຍຫຼັງກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສາມັນສຶກສາ ໃນວາລະຂອງກອງປະຊຸມຄັ້ງວັນທີ 18 ມິຖຸນາ 2025 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 25 ມິຖຸນາ 2025.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສາມັນສຶກສາ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 83 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 25 ມິຖຸນາ 2025

# ກົດໝາຍ
# ວ່າດ້ວຍສາມັນສຶກສາ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານສາມັນສຶກສາ ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວ ໄດ້ມາດຕະຖານ, ມີຄຸນນະພາບ, ມີຄວາມຍືນຍົງ ແນໃສ່ ພັດທະນານັກຮຽນສາມັນສຶກສາ ທາງດ້ານ ຮ່າງກາຍ, ມັນສະໝອງ, ມີສຸຂະພາບພະລານາໄມ, ເປັນພົນລະເມືອງດີ, ມີຄຸນສົມບັດ, ມີຄວາມຮູ້, ມີຄວາມສາມາດ, ມີພື້ນຖານວິຊາຊີບ, ຮູ້ນຳໃຊ້ເຕັກໂນໂລຊີ ທີ່ທັນສະໄໝ, ຮູ້ ອະນຸລັກ, ປົກປັກຮັກສາ ແລະ ສົ່ງເສີມ ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງ ຊາດ, ທ້ອງຖິ່ນ, ສາມາດເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ.

### ມາດຕາ 2 ສາມັນສຶກສາ

ສາມັນສຶກສາ ແມ່ນ ການຮຽນ ການສອນ ຄວາມຮູ້ພື້ນຖານທົ່ວໄປ ໂດຍມີຈຸດໝາຍພັດທະນານັກຮຽນຢ່າງຮອບດ້ານ ໃຫ້ມີ ຄວາມຮູ້, ຄວາມສາມາດ ແລະ ທັກສະ ກ່ຽວກັບ ພາສາລາວ, ຄະນິດສາດ ແລະ/ຫຼື ພາສາຕ່າງປະເທດໃດໜຶ່ງ ຂັ້ນພື້ນຖານ, ມີຄວາມຮູ້ ດ້ານວິທະຍາສາດທຳມະຊາດ, ວິທະຍາສາດສັງຄົມ, ກິລາ-ກາຍຍະກຳ, ສິລະປະ, ວັດທະນະທຳ, ເຕັກໂນໂລຊີ ແລະ ວິຊາຊີບ ເພື່ອກຽມເຂົ້າຮຽນຕໍ່ໃນສາຍອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ຫຼື ປະກອບອາຊີບ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ນັກຮຽນ ໝາຍເຖິງ ຜູ້ກຳລັງຮຽນຢູ່ສາມັນສຶກສາ ທັງໃນໂຮງຮຽນ ແລະ ນອກໂຮງຮຽນ;

2. ຜູ້ດ້ອຍໂອກາດ ໝາຍເຖິງ ຜູ້ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ ຫຼື ບໍ່ມີເງື່ອນໄຂເຂົ້າເຖິງການສຶກສາ ໂດຍສະເພາະ ຜູ້ທຸກຍາກ ຢູ່ເຂດຫ່າງໄກສອກຫຼີກ;

3. ຈັນຍາບັນຂອງຄູ ໝາຍເຖິງ ກົດການປະພຶດຂອງຄູ ທີ່ຄູແຕ່ລະຄົນ ຕ້ອງເຄົາລົບ ແລະ ປະຕິບັດຢ່າງເຂັ້ມງວດ ດ້ວຍຄວາມ ສັດຊື່ບໍລິສຸດ, ຮັກອາຊີບ, ຮັກແພງນັກຮຽນ, ເປັນແບບຢ່າງນຳໜ້າ ແລະ ພັດທະນາຕົນເອງ ໂດຍມີຈັນຍາບັນຕໍ່ ຕົນເອງ, ວິຊາຊີບ, ການຈັດຕັ້ງ, ປະຊາຊົນ ແລະ ໃນສັງຄົມ;

4. ສະຖານສາມັນສຶກສາທີ່ມີຫ້ອງຮຽນສອງພາສາ ໝາຍເຖິງ ໂຮງຮຽນທີ່ມີຫ້ອງຮຽນ ຊຶ່ງຈັດການຮຽນການສອນ ຕາມຫຼັກສູດການສຶກສາແຫ່ງຊາດ ທັງພາສາລາວ ແລະ ພາສາຕ່າງປະເທດ ເປັນຕົ້ນ ວິຊາ ຄະນິດສາດ ແລະ ວິທະຍາສາດທຳມະຊາດ ທີ່ແປຫຼັກສູດເປັນ ພາສາຕ່າງປະເທດ;

5. ທັກສະ ໝາຍເຖິງ ຄວາມສາມາດໃນການຄິດຄົ້ນທາງສະຕິປັນຍາ ແລະ ການປະຕິບັດວຽກງານຕົວຈິງຢ່າງຊຳນານງານ;

6. ທັກສະຊີວິດ ໝາຍເຖິງ ຄວາມສາມາດຂອງບຸກຄົນໃນການແກ້ໄຂບັນຫາອ້ອມຕົວ ໃນສັງຄົມປັດຈຸບັນ ແລະ ການກຽມຄວາມພ້ອມປັບຕົວໃນອະນາຄົດ ເປັນຕົ້ນ ບົດບາດ ຍິງ-ຊາຍ, ເພດສຶກສາ, ສິ່ງເສບຕິດ, ສຸຂະພາບ, ວັດທະນະທຳ, ສິ່ງແວດລ້ອມ, ຊີວິດຄອບຄົວ;

7. ທັກສະຂັ້ນພື້ນຖານ ໝາຍເຖິງ ຄວາມສາມາດໃນ ການດຳລົງຊີວິດ, ການຮຽນ ແລະ ການເຮັດວຽກເຊັ່ນ ມີ ການສື່ສານ, ການຄິດວິເຄາະ, ການແກ້ໄຂບັນຫາ, ການອ່ານ, ການຂຽນ, ການຄິດໄລ່, ຄຸນສົມບັດ, ດຸໝັ່ນ, ປະຢັດ, ອົດທົນ, ສິນທຳ, ຄວາມຮັບຜິດຊອບ, ຄວາມສາມັກຄີ ແລະ ສາມາດຮຽນດ້ວຍຕົນເອງ;

8. ຜູ້ພິການ ໝາຍເຖິງ ບຸກຄົນທີ່ມີຄວາມບົກພ່ອງທາງດ້ານ ຮ່າງກາຍ, ການເບິ່ງເຫັນ, ການໄດ້ຍິນ ແລະ ການປາກເວົ້າ, ສະຕິປັນຍາ, ຄວາມຈື່ຈຳ ແລະ ດ້ານອື່ນ ບວກກັບສິ່ງກີດຂວາງ ຊຶ່ງເປັນອຸປະສັກໃນການເຄື່ອນໄຫວຊີວິດປະຈຳວັນ, ການຮຽນຮູ້ ແລະ ການເຂົ້າຮ່ວມກິດຈະກຳທາງສັງຄົມ ໄດ້ຢ່າງເຕັມສ່ວນ;

9. ຜູ້ມີບັນຫາ ໝາຍເຖິງ ຜູ້ຖືກກັກຂັງ, ດັດສ້າງ ແລະ ບຳບັດ;

10. ທຸດຈະລິດ ໝາຍເຖິງ ຄວາມບໍ່ສັດຊື່ບໍລິສຸດ, ລຳອຽງ, ການຕົວະຍົວະ ແລະ ທຸກການກະທຳທີ່ບໍ່ຖືກຕ້ອງ ແລະ ເປັນທຳ;

11. ສາມລັກສະນະ ໝາຍເຖິງ ຈຸດພິເສດສະເພາະຂອງການສຶກສາລາວ ຊຶ່ງປະກອບດ້ວຍ ລັກສະນະຊາດ, ລັກສະນະວິທະຍາສາດ ແລະ ທັນສະໄໝ, ລັກສະນະມະຫາຊົນ;

12. ຫ້າຫຼັກມູນ ໝາຍເຖິງ ຫຼັກການພື້ນຖານຂອງການສຶກສາລາວ ຊຶ່ງປະກອບດ້ວຍ ຄຸນສົມບັດສຶກສາ, ປັນຍາສຶກສາ, ແຮງງານສຶກສາ, ພະລະສຶກສາ ແລະ ສິລະປະສຶກສາ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານສາມັນສຶກສາ**

ລັດ ຖືເອົາວຽກງານສາມັນສຶກສາ ເປັນພື້ນຖານ ໃນການພັດທະນາຊັບພະຍາກອນມະນຸດ, ສົ່ງເສີມ, ສ້າງໂອກາດ ແລະ ເງື່ອນໄຂໃຫ້ ພົນລະເມືອງ ໂດຍບໍ່ຈຳແນກ ເພດ, ໄວ ແລະ ເຜົ່າ ເຂົ້າເຖິງການສຶກສາ ແລະ

ກຳນົດເອົາຊັ້ນມັດທະຍົມສຶກສາຕອນຕົ້ນ ເປັນການສຶກສາພາກບັງຄັບ ແລະ ເປັນການສຶກສາທີ່ບໍ່ເສຍຄ່າ ຢູ່ໃນສະຖານການສຶກສາຂອງລັດ.

ລັດ ລົງທຶນເຂົ້າໃສ່ການພັດທະນາວຽກງານສາມັນສຶກສາ ໃຫ້ມີຄຸນນະພາບ, ຂະຫຍາຍຕົວຢ່າງທົ່ວເຖິງ ດ້ວຍການກໍ່ສ້າງໂຄງລ່າງພື້ນຖານ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນ, ພັດທະນາ ແລະ ມີນະໂຍບາຍຕໍ່ ນັກຮຽນ, ຄູ ແລະ ບຸກຄະລາກອນການສຶກສາ ຢ່າງເໝາະສົມ ແລະ ສະໜອງຄູໃຫ້ພຽງພໍຕາມຄວາມເປັນຈິງ ແລະ ມີນະໂຍບາຍສົ່ງເສີມ ນັກຮຽນທີ່ດ້ອຍໂອກາດ, ຜູ້ພິການ, ຜູ້ຮຽນເກັ່ງ ແລະ ຜູ້ມີພອນສະຫວັນ.

ລັດ ເອົາໃຈໃສ່ສົ່ງເສີມ ການອະນາໄມ, ສຸຂະພາບ ແລະ ໂພຊະນາການ ເຂົ້າໃນວຽກງານສາມັນສຶກສາ ຕາມກົດໝາຍ ແລະ ລະບຽບການ.

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນໃສ່ການຈັດຕັ້ງ ການຮຽນ ການສອນ ສາມັນສຶກສາ ໂດຍສະເພາະສາມັນວິຊາຊີບ ດ້ວຍນະໂຍບາຍດ້ານຕ່າງໆ.

## ມາດຕາ 5 ຫຼັກການກ່ຽວກັບວຽກງານສາມັນສຶກສາ

ວຽກງານສາມັນສຶກສາ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ແລະ ແຜນພັດທະນາຂະແໜງການສຶກສາທິການ ແລະ ກິລາ ໃນແຕ່ລະໄລຍະ;
2. ຮັບປະກັນ ການຮຽນ ການສອນ ໄປຕາມ ສາມລັກສະນະ ແລະ ຫ້າຫຼັກມູນ ຂອງການສຶກສາ;
3. ຮັບປະກັນຄວາມ ສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ, ຍຸຕິທຳ ແລະ ສາມາດກວດສອບໄດ້;
4. ຮັບປະກັນຄຸນນະພາບການຮຽນ ການສອນ, ການເຊື່ອມໂຍງ, ການແຂ່ງຂັນ ກັບການສຶກສາພາກພື້ນ ແລະ ສາກົນ;
5. ປະສານສົມທົບກັບ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ການມີສ່ວນຮ່ວມ ຂອງຄອບຄົວ, ຊຸມຊົນ ແລະ ສັງຄົມ.

## ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບ ວຽກງານສາມັນສຶກສາ ຢູ່ ສປປ ລາວ.

## ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສາມັນສຶກສາ ດ້ວຍການແລກປ່ຽນບົດຮຽນທາງດ້ານ ວິຊາການ, ວິທະຍາສາດ, ເຕັກໂນໂລຊີ, ຂໍ້ມູນ ຂ່າວສານ ແລະ ການສື່ສານ, ການຝຶກອົບຮົມ, ການຄົ້ນຄວ້າ, ການຮຽນ ການສອນ, ການຄຸ້ມຄອງບໍລິຫານການສຶກສາເພື່ອພັດທະນາວຽກງານດັ່ງກ່າວ ໃຫ້ມີຄຸນນະພາບ, ປະສິດທິພາບ ແລະ ປະສິດທິຜົນ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

# ພາກທີ II
# ລະບົບສາມັນສຶກສາ

**ມາດຕາ 8 ລະບົບສາມັນສຶກສາ**

ລະບົບສາມັນສຶກສາ ປະກອບດ້ວຍ:

1. ສາມັນສຶກສາໃນໂຮງຮຽນ;
2. ສາມັນສຶກສານອກໂຮງຮຽນ.

## ໝວດທີ 1
## ສາມັນສຶກສາໃນໂຮງຮຽນ

**ມາດຕາ 9 ສາມັນສຶກສາໃນໂຮງຮຽນ**

ສາມັນສຶກສາໃນໂຮງຮຽນ ແມ່ນ ການຈັດຕັ້ງການຮຽນ ການສອນ ຢູ່ໃນໂຮງຮຽນສາມັນ ຢ່າງເປັນລະບົບປົກກະຕິ, ມີກຳນົດເວລາຮຽນ ສິບສອງປີ ແລະ ມີເນື້ອໃນຫຼັກສູດທີ່ຖືກຕ້ອງ ຕາມມາດຕະຖານການສຶກສາແຫ່ງຊາດ.

**ມາດຕາ 10 ໂຄງປະກອບສາມັນສຶກສາ**

ໂຄງປະກອບສາມັນສຶກສາ ປະກອບດ້ວຍ:

1. ຊັ້ນປະຖົມສຶກສາ;
2. ຊັ້ນມັດທະຍົມສຶກສາຕອນຕົ້ນ;
3. ຊັ້ນມັດທະຍົມສຶກສາຕອນປາຍ.

**ມາດຕາ 11 ຊັ້ນປະຖົມສຶກສາ**

ຊັ້ນປະຖົມສຶກສາ ແມ່ນ ການສຶກສາເບື້ອງຕົ້ນຂອງສາຍສາມັນສຶກສາ ໂດຍຜ່ານການຮຽນ ການສອນ ຕາມຫຼັກສູດຊັ້ນປະຖົມສຶກສາ ຊຶ່ງມີ ຫົກຂັ້ນຮຽນ ເພື່ອຮັບປະກັນໃຫ້ນັກຮຽນ ມີຄວາມຮູ້ທົ່ວໄປ ແລະ ມີຄວາມສາມາດໃນການ ເບິ່ງ, ຟັງ, ເວົ້າ, ອ່ານ, ຂຽນ, ຖາມ, ຄິດໄລ່, ສຸຂານາໄມ, ກິລາ-ກາຍຍະກຳ, ການຝຶກແອບສິລະປະ, ເຕັກໂນໂລຊີ ແລະ ພາສາຕ່າງປະເທດ ຂັ້ນພື້ນຖານ.

**ມາດຕາ 12 ຊັ້ນມັດທະຍົມສຶກສາຕອນຕົ້ນ**

ຊັ້ນມັດທະຍົມສຶກສາຕອນຕົ້ນ ແມ່ນ ການສຶກສາຂັ້ນພື້ນຖານ ໂດຍຜ່ານການຮຽນ ການສອນ ຕາມຫຼັກສູດຊັ້ນມັດທະຍົມສຶກສາຕອນຕົ້ນ ຊຶ່ງມີ ສາມຂັ້ນຮຽນ ເພື່ອໃຫ້ນັກຮຽນ ມີຄວາມຮູ້ພື້ນຖານ ກ່ຽວກັບ ພາສາລາວ, ຄະນິດສາດ, ວິທະຍາສາດທຳມະຊາດ, ວິທະຍາສາດສັງຄົມ, ກິລາ-ກາຍຍະກຳ, ສິລະປະ, ເຕັກໂນໂລຊີ, ວິຊາຊີບ, ພາສາຕ່າງປະເທດ ແລະ ທັກສະຂັ້ນພື້ນຖານ ສຳລັບຮຽນຕໍ່ໃນຊັ້ນມັດທະຍົມສຶກສາຕອນປາຍ ແລະ ອາຊີວະສຶກສາ.

ມາດຕາ 13 ຊັ້ນມັດທະຍົມສຶກສາຕອນປາຍ

ຊັ້ນມັດທະຍົມສຶກສາຕອນປາຍ ແມ່ນ ການສຶກສາທີ່ສືບຕໍ່ການຮຽນ ການສອນ ຈາກຊັ້ນມັດທະຍົມສຶກສາຕອນຕົ້ນ ໂດຍຜ່ານການຮຽນ ການສອນ ຕາມຫຼັກສູດຊັ້ນມັດທະຍົມສຶກສາຕອນປາຍ ຊຶ່ງມີ ສາມຂັ້ນຮຽນ ເພື່ອຍົກລະດັບ, ຂະຫຍາຍເນື້ອໃນທີ່ໄດ້ຮຽນມາ ເພື່ອພັດທະນາ ຄວາມຮູ້, ຄວາມສາມາດ ແລະ ພອນສະຫວັນ ຂອງນັກຮຽນ ສໍາລັບການຮຽນຕໍ່ ອາຊີວະສຶກສາ, ການສຶກສາຊັ້ນສູງ ຫຼື ປະກອບອາຊີບ.

## ໝວດທີ 2
## ສາມັນສຶກສານອກໂຮງຮຽນ

ມາດຕາ 14 ສາມັນສຶກສານອກໂຮງຮຽນ

ສາມັນສຶກສານອກໂຮງຮຽນ ແມ່ນ ການຮຽນ ການສອນ ທີ່ມີເນື້ອໃນຫຼັກສູດ ແລະ ຊັ້ນຮຽນຕ່າງໆ ຄືກັນກັບສາມັນສຶກສາໃນໂຮງຮຽນ ໂດຍຕ່າງແຕ່ ຮູບການ, ວິທີການຮຽນ ການສອນ, ໄລຍະເວລາ ຕາມເງື່ອນໄຂ ຄວາມສາມາດ ແລະ ຄວາມພ້ອມຂອງນັກຮຽນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການ.

ສາມັນສຶກສານອກໂຮງຮຽນ ປະກອບດ້ວຍ ການລຶບລ້າງຄວາມບໍ່ຮູ້ໜັງສື ແລະ ການບໍາລຸງຍົກລະດັບການສຶກສາ.

ມາດຕາ 15 ການລຶບລ້າງຄວາມບໍ່ຮູ້ໜັງສື

ການລຶບລ້າງຄວາມບໍ່ຮູ້ໜັງສື ແມ່ນ ການຈັດການຮຽນ ການສອນ ໃຫ້ກຸ່ມເປົ້າໝາຍ ຜູ້ດ້ອຍໂອກາດ ແລະ ບໍ່ມີເງື່ອນໄຂໄດ້ເຂົ້າຮຽນ ໂດຍມີຈຸດໝາຍ ໃຫ້ຜູ້ຮຽນສາມາດ ຟັງ, ເວົ້າ, ອ່ານ, ຂຽນ ພາສາລາວ ແລະ ຄິດໄລ່ເລກ ໄດ້ຂັ້ນພື້ນຖານ.

ມາດຕາ 16 ການບໍາລຸງຍົກລະດັບການສຶກສາ

ການບໍາລຸງຍົກລະດັບການສຶກສາ ແມ່ນ ການຈັດການຮຽນ ການສອນ ທີ່ສືບຕໍ່ຈາກການລຶບລ້າງຄວາມບໍ່ຮູ້ໜັງສື ຫຼື ກຸ່ມເປົ້າໝາຍອື່ນທີ່ດ້ອຍໂອກາດ ເພື່ອຍົກລະດັບການສຶກສາໃນ ຊັ້ນປະຖົມສຶກສາ, ຊັ້ນມັດທະຍົມສຶກສາຕອນຕົ້ນ ແລະ ຊັ້ນມັດທະຍົມສຶກສາຕອນປາຍ ໂດຍມີຈຸດໝາຍ ໃຫ້ຜູ້ຮຽນ ມີ ຄວາມຮູ້, ຄວາມສາມາດ ທາງດ້ານວິທະຍາສາດ ແລະ ເຕັກນິກ ສູງຂຶ້ນ ເພື່ອຍົກຄຸນນະພາບຊີວິດຂອງຕົນ ໃຫ້ດີຂຶ້ນ.

# ພາກທີ III
# ການສຶກສາ ຂັ້ນພື້ນຖານ ແລະ ພາກບັງຄັບ

ມາດຕາ 17 ການສຶກສາຂັ້ນພື້ນຖານ

ການສຶກສາຂັ້ນພື້ນຖານ ແມ່ນ ການຮຽນ ການສອນ ຢູ່ໃນຊັ້ນປະຖົມສຶກສາ ຫາ ຊັ້ນມັດທະຍົມສຶກສາຕອນຕົ້ນ ໂດຍໃຫ້ຜູ້ຮຽນ ມີ ຄວາມຮູ້, ຄວາມສາມາດ ແລະ ທັກສະຂັ້ນພື້ນຖານ ເພື່ອສາມາດປະກອບອາຊີບ ແລະ ດໍາລົງຊີວິດຢູ່ໃນສັງຄົມ ພ້ອມທັງເປັນພື້ນຖານໃຫ້ແກ່ການຮຽນຮູ້ໃນຂັ້ນຕໍ່ໄປ.

ມາດຕາ 18 ການສຶກສາພາກບັງຄັບ

ການສຶກສາພາກບັງຄັບ ແມ່ນ ການສຶກສາທີ່ຈຳເປັນໃນສາຍສາມັນສຶກສາ ຊຶ່ງພົນລະເມືອງທຸກຄົນຕ້ອງຮຽນໃຫ້ຈົບຊັ້ນມັດທະຍົມສຶກສາຕອນຕົ້ນ.

## ພາກທີ IV
## ສະຖານສາມັນສຶກສາ
### ໝວດທີ 1
### ປະເພດສະຖານສາມັນສຶກສາ

ມາດຕາ 19 ປະເພດສະຖານສາມັນສຶກສາ

ປະເພດສະຖານສາມັນສຶກສາ ມີ ດັ່ງນີ້:

1. ໂຮງຮຽນປະຖົມ;
2. ໂຮງຮຽນມັດທະຍົມຕອນຕົ້ນ;
3. ໂຮງຮຽນມັດທະຍົມຕອນປາຍ;
4. ໂຮງຮຽນມັດທະຍົມສົມບູນ;
5. ໂຮງຮຽນສາມັນວິຊາຊີບ.

ໃນກໍລະນີຈຳເປັນ ສະຖານສາມັນສຶກສາ ແຕ່ລະປະເພດ ອາດມີການເພີ່ມເຕີມ ຫຼື ປ່ຽນແປງ ຕາມການຕົກລົງຂອງກະຊວງສຶກສາທິການ ແລະ ກິລາ.

ມາດຕາ 20 ໂຮງຮຽນປະຖົມ

ໂຮງຮຽນປະຖົມ ແມ່ນ ສະຖານການຮຽນ ການສອນ ຕາມຫຼັກສູດຊັ້ນປະຖົມສຶກສາ ຄົບທຸກຂັ້ນຮຽນແຕ່ຂັ້ນ ປ. 1 ຫາ ຂັ້ນ ປ. 6 ຊຶ່ງເອີ້ນວ່າ ໂຮງຮຽນປະຖົມສົມບູນ.

ໃນກໍລະນີ ມີການຈັດການຮຽນ ການສອນ ຕາມຫຼັກສູດຊັ້ນປະຖົມສຶກສາ ບໍ່ຄົບທຸກຂັ້ນຮຽນ ຊຶ່ງເອີ້ນວ່າ ໂຮງຮຽນມູນລະປະຖົມ.

ມາດຕາ 21 ໂຮງຮຽນມັດທະຍົມຕອນຕົ້ນ

ໂຮງຮຽນມັດທະຍົມຕອນຕົ້ນ ແມ່ນ ສະຖານການຮຽນ ການສອນ ຕາມຫຼັກສູດຊັ້ນມັດທະຍົມສຶກສາຕອນຕົ້ນ ແຕ່ຂັ້ນ ມ. 1 ຫາ ຂັ້ນ ມ. 3.

ມາດຕາ 22 ໂຮງຮຽນມັດທະຍົມຕອນປາຍ

ໂຮງຮຽນມັດທະຍົມຕອນປາຍ ແມ່ນ ສະຖານການຮຽນ ການສອນ ຕາມຫຼັກສູດຊັ້ນມັດທະຍົມສຶກສາຕອນປາຍ ແຕ່ຂັ້ນ ມ. 4 ຫາ ຂັ້ນ ມ. 6.

**ມາດຕາ 23 ໂຮງຮຽນມັດທະຍົມສົມບູນ**

ໂຮງຮຽນມັດທະຍົມສົມບູນ ແມ່ນ ສະຖານການຮຽນ ການສອນ ຕາມຫຼັກສູດຊັ້ນມັດທະຍົມສຶກສາຕອນຕົ້ນ ແລະ ມັດທະຍົມສຶກສາຕອນປາຍ.

**ມາດຕາ 24 ໂຮງຮຽນສາມັນວິຊາຊີບ**

ໂຮງຮຽນສາມັນວິຊາຊີບ ແມ່ນ ສະຖານການຮຽນ ການສອນ ສອງຫຼັກສູດຄວບຄູ່ກັນ ຊຶ່ງປະກອບດ້ວຍຫຼັກສູດສາມັນສຶກສາ ແລະ ຫຼັກສູດວິຊາຊີບຊັ້ນຕົ້ນ.

## ໝວດທີ 2
## ການສ້າງຕັ້ງ ແລະ ການຍຸບເລີກ

**ມາດຕາ 25 ການສ້າງຕັ້ງສະຖານສາມັນສຶກສາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງສະຖານສາມັນສຶກສາ ໃຫ້ຍື່ນຄຳຮ້ອງຕໍ່ຂະແໜງການສຶກສາທິການ ແລະ ກິລາ ເພື່ອພິຈາລະນາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

ການສ້າງຕັ້ງສະຖານສາມັນສຶກສາ ທັງພາກລັດ ແລະ ເອກະຊົນ ຕ້ອງສອດຄ່ອງກັບ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ແລະ ມາດຕະຖານການສ້າງຕັ້ງສະຖານສາມັນສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດ.

ສຳລັບ ເງື່ອນໄຂ ແລະ ມາດຕະຖານຂອງການສ້າງຕັ້ງສະຖານສາມັນສຶກສາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 26 ການອະນຸຍາດສ້າງຕັ້ງສະຖານສາມັນສຶກສາ**

ຂະແໜງການສຶກສາທິການ ແລະ ກິລາ ເປັນຜູ້ອະນຸຍາດສ້າງຕັ້ງສະຖານສາມັນສຶກສາ ແຕ່ລະປະເພດ ໂດຍສອດຄ່ອງກັບ ກົດໝາຍສະບັບນີ້, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 27 ການຂະຫຍາຍ, ໂຮມ, ແຍກ ແລະ/ຫຼື ຍົກລະດັບ ສະຖານສາມັນສຶກສາ**

ສະຖານສາມັນສຶກສາ ທັງພາກລັດ ແລະ ເອກະຊົນ ທີ່ມີຈຸດປະສົງ ຂະຫຍາຍ, ໂຮມ, ແຍກ ແລະ/ຫຼື ຍົກລະດັບ ສະຖານສາມັນສຶກສາຂອງຕົນ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ປະກອບເອກະສານ ຂໍອະນຸຍາດນຳຂະແໜງການສຶກສາທິການ ແລະ ກິລາ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳລັບ ການ ຂະຫຍາຍ, ໂຮມ, ແຍກ ແລະ/ຫຼື ຍົກລະດັບ ສະຖານສາມັນສຶກສາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 28 ການໂຈະການເຄື່ອນໄຫວຂອງສະຖານສາມັນສຶກສາ

ສະຖານສາມັນສຶກສາ ຈະຖືກໂຈະການເຄື່ອນໄຫວ ໃນກໍລະນີ ດັ່ງນີ້:

1. ມີ ຄໍາຮ້ອງຂອງສະຖານສາມັນສຶກສາ ຫຼື ການສະເໜີ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
2. ເຄື່ອນໄຫວບໍ່ຖືກກັບ ພາລະບົດບາດ, ຈຸດປະສົງ ແລະ ເປົ້າໝາຍ ຂອງສະຖານສາມັນສຶກສາ;
3. ບໍ່ປັບປຸງ ຫຼື ບໍ່ພັດທະນາຄຸນນະພາບການສຶກສາ ຕາມການແນະນໍາຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ;
4. ມີກໍລະນີອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ມາດຕາ 29 ການຍຸບເລີກສະຖານສາມັນສຶກສາ

ສະຖານສາມັນສຶກສາ ຈະຖືກຍຸບເລີກ ໃນກໍລະນີ ດັ່ງນີ້:

1. ມີ ຄໍາຮ້ອງຂໍຍຸບເລີກ ດ້ວຍຄວາມສະໝັກໃຈຂອງຕົນ ຫຼື ການສະເໜີ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;
2. ລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
3. ບໍ່ ປັບປຸງ ແລະ ແກ້ໄຂຕາມການແຈ້ງໂຈະ;
4. ຖືກຖອນໃບອະນຸຍາດການສ້າງຕັ້ງ;
5. ຖືກສານຕັດສິນໃຫ້ຍຸບເລີກ;
6. ມີກໍລະນີອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ພາກທີ V
## ຫຼັກສູດ ແລະ ການຈັດ ການຮຽນ ການສອນ
### ໝວດທີ 1
### ຫຼັກສູດ

ມາດຕາ 30 ຫຼັກສູດສາມັນສຶກສາ

ຫຼັກສູດສາມັນສຶກສາ ແມ່ນ ເອກະສານ ທີ່ກໍານົດຫຼັກການ, ຈຸດໝາຍຂອງການສຶກສາ, ໂຄງສ້າງເນື້ອໃນວິຊາຕ່າງໆ, ວິທີການຈັດຕັ້ງການຮຽນ ການສອນ ຂອງແຕ່ລະຊັ້ນ, ແຕ່ລະສາຍ, ການວັດຜົນ ແລະ ການປະເມີນຜົນວິຊາຮຽນຕ່າງໆ ເພື່ອຮັບປະກັນໃຫ້ນັກຮຽນ ມີ ຄວາມຮູ້, ຄວາມສາມາດ, ທັກສະ, ຄວາມສະຫຼາດ ແລະ ຄຸນສົມບັດ.

ຫຼັກສູດສາມັນສຶກສາ ປະກອບດ້ວຍ ຫຼັກສູດການສຶກສາແຫ່ງຊາດ, ຫຼັກສູດການສຶກສາທ້ອງຖິ່ນ ແລະ ຫຼັກສູດການສຶກສານານາຊາດ.

ນອກຈາກນັ້ນ ຍັງມີຫຼັກສູດວິຊາຊີບຊັ້ນຕົ້ນ ທີ່ສາມາດນໍາໃຊ້ ສໍາລັບຊັ້ນມັດທະຍົມສຶກສາ ຕອນຕົ້ນ ແລະ ຕອນປາຍ ໂດຍກະຊວງສຶກສາທິການ ແລະ ກິລາ ອະນຸມັດໃຫ້ນໍາໃຊ້ ໃນແຕ່ລະໄລຍະ.

ມາດຕາ 31 ເນື້ອໃນຫຼັກສູດສາມັນສຶກສາ

ເນື້ອໃນຫຼັກສູດສາມັນສຶກສາ ຕ້ອງຮັບປະກັນ ສາມລັກສະນະ ແລະ ຫ້າຫຼັກມູນ ຂອງການສຶກສາ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ເນື້ອໃນຫຼັກສູດການສຶກສາແຫ່ງຊາດ ໃຫ້ເປັນເອກະພາບກັນໃນທົ່ວປະເທດ.

ສໍາລັບ ທ້ອງຖິ່ນ ທີ່ມີຈຸດພິເສດ, ທ່າແຮງ ແລະ ພູມປັນຍາທີ່ໂດດເດັ່ນ ກໍສາມາດກໍານົດເຂົ້າເປັນເນື້ອໃນຫຼັກສູດການສຶກສາທ້ອງຖິ່ນ ແຕ່ບໍ່ໃຫ້ເກີນ ຊາວສ່ວນຮ້ອຍ ຂອງຫຼັກສູດການສຶກສາແຫ່ງຊາດ ຕາມການເຫັນດີຂອງກະຊວງສຶກສາທິການ ແລະ ກິລາ.

ສໍາລັບ ຫຼັກສູດການສຶກສານານາຊາດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 32 ການຮັບຮອງເນື້ອໃນຫຼັກສູດ

ເນື້ອໃນຫຼັກສູດສາມັນສຶກສາ ໃນໂຮງຮຽນ ແລະ ນອກໂຮງຮຽນ ແຕ່ລະຊັ້ນ, ແຕ່ລະສາຍ ຕ້ອງຮັບປະກັນໃຫ້ມີ ມາດຕະຖານ ແລະ ປະກາສະນີຍະບັດທຽບເທົ່າກັນ ໂດຍການຮັບຮອງຈາກກະຊວງສຶກສາທິການ ແລະ ກິລາ.

ສໍາລັບ ມາດຕະຖານຫຼັກສູດ ແລະ ປະກາສະນີຍະບັດ ລະຫວ່າງປະເທດ ໃຫ້ປະຕິບັດບົນພື້ນຖານການຕົກລົງຮ່ວມກັນຂອງສອງຝ່າຍ ຫຼື ຫຼາຍຝ່າຍ ແຕ່ຕ້ອງສອດຄ່ອງກັບມາດຕະຖານການສຶກສາຂອງບັນດາປະເທດໃນພາກພື້ນ ແລະ ສາກົນ.

ມາດຕາ 33 ການພັດທະນາ ແລະ ປັບປຸງ ຫຼັກສູດສາມັນສຶກສາ

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຮັບຜິດຊອບ ພັດທະນາ ແລະ ປັບປຸງຫຼັກສູດສາມັນສຶກສາໃຫ້ສອດຄ່ອງກັບມາດຕະຖານຫຼັກສູດການສຶກສາແຫ່ງຊາດ ແລະ ປະຕິບັດຕາມ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ, ແຜນພັດທະນາຂະແໜງການສຶກສາທິການ ແລະ ກິລາ, ຜົນການຄົ້ນຄວ້າວິທະຍາສາດການສຶກສາ ແລະ ສະພາບຄວາມເປັນຈິງ ໃນແຕ່ລະໄລຍະ.

ສໍາລັບຫຼັກສູດການສຶກສາທ້ອງຖິ່ນ ແມ່ນ ພະແນກສຶກສາທິການ ແລະ ກິລາ ຂັ້ນແຂວງ ເປັນຜູ້ຮັບຜິດຊອບພັດທະນາ ແລະ ປັບປຸງ ຫຼັກສູດດັ່ງກ່າວ.

ມາດຕາ 34 ການອະນຸມັດ ແລະ ການຍົກເລີກ ການນໍາໃຊ້ຫຼັກສູດ

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ອະນຸມັດ ແລະ ຍົກເລີກ ການນໍາໃຊ້ ຫຼັກສູດສາມັນສຶກສາ.

ພະແນກສຶກສາທິການ ແລະ ກິລາ ຂັ້ນແຂວງ ເປັນຜູ້ອະນຸມັດ ແລະ ຍົກເລີກການນໍາໃຊ້ ຫຼັກສູດການສຶກສາທ້ອງຖິ່ນ ຕາມການເຫັນດີຂອງກະຊວງສຶກສາທິການ ແລະ ກິລາ.

ສໍາລັບຫຼັກສູດການສຶກສານານາຊາດ ຕ້ອງໄດ້ຮັບການອະນຸມັດ ແລະ ຍົກເລີກການນໍາໃຊ້ ຫຼັກສູດຈາກເຈົ້າຂອງຫຼັກສູດ ໂດຍໄດ້ຮັບການເຫັນດີຈາກກະຊວງສຶກສາທິການ ແລະ ກິລາ.

## ໝວດທີ 2
## ການຈັດການຮຽນ ການສອນ

**ມາດຕາ 35 ເງື່ອນໄຂການຈັດການຮຽນ ການສອນ**

ສະຖານສາມັນສຶກສາ ຈັດການຮຽນ ການສອນ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີການຈັດການຮຽນ ການສອນ ຕາມຫຼັກສູດສາມັນສຶກສາ;
2. ມີຄູສອນ ຕາມຫຼັກສູດ ທີ່ໄດ້ກຳນົດໄວ້;
3. ມີໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກໃນສະຖານສາມັນສຶກສາ ໂດຍພື້ນຖານຕາມຫຼັກສູດທີ່ໄດ້ກຳນົດໄວ້;
4. ມີເງື່ອນໄຂອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 36 ການຮັບເອົານັກຮຽນ**

ການຮັບເອົານັກຮຽນ ເຂົ້າແຕ່ລະຊັ້ນຮຽນ ໃຫ້ປະຕິບັດ ດັ່ງນີ້:

1. ຊັ້ນປະຖົມສຶກສາ ຮັບເອົານັກຮຽນທີ່ມີອາຍຸ ແຕ່ ຫົກປີ ຂຶ້ນໄປ;
2. ຊັ້ນມັດທະຍົມສຶກສາຕອນຕົ້ນ ຮັບເອົານັກຮຽນທີ່ຈົບຊັ້ນປະຖົມສຶກສາ;
3. ຊັ້ນມັດທະຍົມສຶກສາຕອນປາຍ ຮັບເອົານັກຮຽນທີ່ຈົບຊັ້ນມັດທະຍົມສຶກສາຕອນຕົ້ນ.

ສຳລັບ ການຮັບເອົານັກຮຽນທີ່ຈົບທຽບເທົ່າ ຊັ້ນ ປະຖົມສຶກສາ ແລະ ມັດທະຍົມສຶກສາຕອນຕົ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 37 ຮູບແບບການຈັດການຮຽນ ການສອນ**

ສາມັນສຶກສາ ມີຮູບແບບການຈັດການຮຽນ ການສອນ ດັ່ງນີ້:

1. ການຈັດການຮຽນ ການສອນ ໃນສະຖານສາມັນສຶກສາ;
2. ການຈັດການຮຽນ ການສອນ ນອກສະຖານສາມັນສຶກສາ.

ສຳລັບ ການຈັດການຮຽນ ການສອນ ລວມທັງການຄຸ້ມຄອງແຕ່ລະຮູບແບບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 38 ຕຳລາຮຽນ ແລະ ສື່ການຮຽນ ການສອນ**

ສະຖານສາມັນສຶກສາ ໃຫ້ນຳໃຊ້ຕຳລາຮຽນ ທີ່ກະຊວງສຶກສາທິການ ແລະ ກິລາ ອະນຸມັດ ແລະ ສາມາດນຳໃຊ້ຕຳລາຮຽນອື່ນ ທີ່ມີເນື້ອໃນສອດຄ່ອງກັບຫຼັກສູດສາມັນສຶກສາ.

ສະຖານສາມັນສຶກສາ ໃຫ້ນຳໃຊ້ສື່ການຮຽນ ການສອນ ທີ່ກະຊວງສຶກສາທິການ ແລະ ກິລາ ອະນຸມັດ ແລະ ນຳໃຊ້ອຸປະກອນທີ່ຫາໄດ້ໃນທ້ອງຖິ່ນຂອງຕົນ ໂດຍສອດຄ່ອງກັບເນື້ອໃນຫຼັກສູດສາມັນສຶກສາ.

ມາດຕາ 39 ພາສາທີ່ໃຊ້ໃນການຮຽນ ການສອນ

ພາສາທີ່ໃຊ້ໃນການຮຽນ ການສອນ ໃນສາຍສາມັນສຶກສາ ແມ່ນ ພາສາລາວ, ອັກສອນລາວ, ຕົວເລກລາວ, ຕົວເລກສາກົນ. ສໍາລັບພາສາຕ່າງປະເທດນັ້ນ ສາມາດໃຊ້ໃນການຮຽນ ການສອນໄດ້ ແຕ່ຕ້ອງໄດ້ຮັບອະນຸຍາດຈາກກະຊວງສຶກສາທິການ ແລະ ກິລາ.

ສໍາລັບ ການໃຊ້ ພາສາລາວ ແລະ ພາສາຕ່າງປະເທດ ຢູ່ສະຖານສາມັນສຶກສາ ທີ່ມີຫ້ອງຮຽນສອງພາສາ ຕ້ອງຂໍອະນຸຍາດນໍາ ກະຊວງສຶກສາທິການ ແລະ ກິລາ.

ມາດຕາ 40 ການຄຸ້ມຄອງການຮຽນ ການສອນ

ການຄຸ້ມຄອງການຮຽນ ການສອນຂອງສະຖານສາມັນສຶກສາ ໃຫ້ປະຕິບັດ ດັ່ງນີ້:

1. ຄຸ້ມຄອງຕາມແຜນການຮຽນ ການສອນ ຂອງແຕ່ລະສົກຮຽນ;
2. ຄຸ້ມຄອງຕາມການປະຕິບັດຊົ່ວໂມງສອນຂອງຫຼັກສູດຕໍ່ສົກຮຽນ;
3. ມີການປະກັນຄຸນນະພາບການສຶກສາ, ການກວດກາ ແລະ ປະເມີນຜົນການຮຽນ ການສອນ;
4. ຄຸ້ມຄອງ ຄູ ແລະ ນັກຮຽນຂອງສະຖານສາມັນສຶກສາ ຕາມລະບຽບການ ຢ່າງເຂັ້ມງວດ;
5. ຄຸ້ມຄອງວຽກງານອື່ນ ທີ່ເຫັນວ່າມີຄວາມຈໍາເປັນ.

## ໝວດທີ 3
## ການວັດ ແລະ ປະເມີນຜົນ ການຮຽນ ການສອນ

ມາດຕາ 41 ການວັດ ແລະ ປະເມີນຜົນ

ການວັດ ແລະ ປະເມີນຜົນ ການຮຽນ ການສອນ ແມ່ນ ການຕີລາຄາຜົນສໍາເລັດດ້ານການຮຽນຂອງນັກຮຽນ ແລະ ການສອນຂອງຄູ ຢູ່ສະຖານສາມັນສຶກສາ ດ້ວຍວິທີການ ວັດຜົນຕໍ່ເນື່ອງ ແລະ ສອບເສັງ ຕາມທີ່ໄດ້ກໍານົດໄວ້ໃນຫຼັກສູດສາມັນສຶກສາ ແລະ ຮັບປະກັນຕາມ ສາມລັກສະນະ ແລະ ຫ້າຫຼັກມູນການສຶກສາ.

ສໍາລັບ ຂັ້ນຕອນຂອງການວັດ ແລະ ປະເມີນຜົນ ການຮຽນ ການສອນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 42 ປະເພດການວັດ ແລະ ປະເມີນຜົນ

ການວັດ ແລະ ປະເມີນຜົນ ການຮຽນ ການສອນ ຢູ່ສະຖານສາມັນສຶກສາ ມີ ສີ່ປະເພດ ດັ່ງນີ້:

1. ການປະເມີນໃນຫ້ອງຮຽນ;
2. ການສອບເສັງພາຍໃນໂຮງຮຽນ;
3. ການສອບເສັງພາຍນອກ;
4. ການປະເມີນຂະໜາດໃຫຍ່.

ມາດຕາ 43 ການປະເມີນໃນຫ້ອງຮຽນ

ການປະເມີນໃນຫ້ອງຮຽນ ແມ່ນ ການປະເມີນຜົນ ຄວາມກ້າວໜ້າດ້ານການຮຽນຂອງນັກຮຽນ ແລະ ການສອນຂອງຄູ ໃນລະຫວ່າງການດໍາເນີນການຮຽນ ການສອນ ເພື່ອປັບປຸງການຮຽນ ການສອນ ໃຫ້ດີຂຶ້ນ.

ຄູ ຕ້ອງດຳເນີນການປະເມີນໃນຫ້ອງຮຽນ ຢ່າງເປັນປົກກະຕິ ໂດຍໃຫ້ນັກຮຽນມີສ່ວນຮ່ວມ ຊຶ່ງນຳໃຊ້ເຄື່ອງມື ແລະ ວິທີການປະເມີນຕ່າງໆ ທີ່ເໝາະສົມ.

**ມາດຕາ 44 ການສອບເສັງພາຍໃນໂຮງຮຽນ**

ການສອບເສັງພາຍໃນໂຮງຮຽນ ແມ່ນ ການສອບເສັງວັດລະດັບຄວາມຮູ້ ແລະ ທັກສະຂອງນັກຮຽນ ໃນທ້າຍ ພາກຮຽນທີ I ແລະ ພາກຮຽນທີ II ເພື່ອປະເມີນຜົນການຮຽນ ແລະ ມີຜົນຕໍ່ການເລື່ອນຂັ້ນ, ຍົກເວັ້ນ ປ.6, ມ.3 ແລະ ມ.6 ໃນພາກຮຽນທີ II.

ສຳລັບ ຫຼັກການ, ຂອບເຂດ ແລະ ວິທີດຳເນີນການສອບເສັງພາຍໃນໂຮງຮຽນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 45 ການສອບເສັງພາຍນອກ**

ການສອບເສັງພາຍນອກ ແມ່ນ ການສອບເສັງຈົບຊັ້ນທີ່ເປັນເອກະພາບທາງດ້ານ ລະດັບຂໍ້ສອບ, ກຳນົດເວລາ ແລະ ວິທີການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ. ການສອບເສັງພາຍນອກ ດຳເນີນສະເພາະ ຂັ້ນ ປ.6, ມ.3 ແລະ ມ.6 ໃນທ້າຍສົກຮຽນ. ຜົນການສອບເສັງພາຍນອກນັ້ນ ຖືກນຳໃຊ້ ເພື່ອການຕັດສິນການຈົບຊັ້ນ ໂດຍອີງໃສ່ເກນທີ່ໄດ້ກຳນົດໄວ້.

ນອກຈາກການສອບເສັງຈົບຊັ້ນ ຍັງມີການສອບເສັງນັກຮຽນເກັ່ງລະດັບຊາດ ແລະ ລະດັບທ້ອງຖິ່ນ ໃນແຕ່ລະສົກຮຽນ ເພື່ອສົ່ງເສີມພອນສະຫວັນຂອງນັກຮຽນ, ຍົກສູງຄຸນນະພາບຂອງຄູ ແລະ ພັດທະນາຊັບພະຍາກອນມະນຸດ ໃຫ້ມີຄຸນນະພາບ, ສາມາດແຂ່ງຂັນ ໃນລະດັບ ພາກພື້ນ ແລະ ສາກົນ.

ສຳລັບ ຫຼັກການ, ຂອບເຂດ ແລະ ວິທີດຳເນີນການສອບເສັງພາຍນອກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 46 ການປະເມີນຂະໜາດໃຫຍ່**

ການປະເມີນຂະໜາດໃຫຍ່ ແມ່ນ ການປະເມີນຜົນສຳເລັດດ້ານການຮຽນຂອງນັກຮຽນ ໃນລະດັບຊາດ, ພາກພື້ນ ແລະ ສາກົນ ໂດຍໃຊ້ກຸ່ມຕົວຢ່າງ ແລະ ເຄື່ອງມື ຕາມຈຸດປະສົງຂອງການປະເມີນ ເພື່ອສະໜອງຂໍ້ມູນໃຫ້ແກ່ການປັບປຸງນະໂຍບາຍດ້ານການສຶກສາ.

## ໝວດທີ 4
## ປະກາສະນີຍະບັດ, ໃບຢັ້ງຢືນ ແລະ ການທຽບ ຂັ້ນ, ຊັ້ນ

**ມາດຕາ 47 ປະກາສະນີຍະບັດ**

ປະກາສະນີຍະບັດ ແມ່ນ ເອກະສານທາງການທີ່ຢັ້ງຢືນລະດັບການສຶກສາ ຊຶ່ງອອກໃຫ້ນັກຮຽນທີ່ສຳເລັດການສຶກສາແຕ່ລະຊັ້ນຂອງແຕ່ລະສົກຮຽນ ໃນສະຖານສາມັນສຶກສາ ທັງໃນໂຮງຮຽນ ແລະ ນອກໂຮງຮຽນ.

ສຳລັບ ນັກຮຽນທີ່ສຳເລັດການສຶກສາສາມັນວິຊາຊີບ ຈະໄດ້ຮັບປະກາສະນີຍະບັດວິຊາຊີບຊັ້ນຕົ້ນ.

ປະກາສະນີຍະບັດ ສາມາດນຳໃຊ້ເຂົ້າໃນການສຶກສາຕໍ່ ຫຼື ປະກອບອາຊີບ.

ມາດຕາ 48 ປະເພດປະກາສະນິຍະບັດ

ປະເພດປະກາສະນິຍະບັດ ມີ ດັ່ງນີ້:

1. ປະກາສະນິຍະບັດຊັ້ນປະຖົມສຶກສາ;
2. ປະກາສະນິຍະບັດຊັ້ນມັດທະຍົມສຶກສາຕອນຕົ້ນ;
3. ປະກາສະນິຍະບັດຊັ້ນມັດທະຍົມສຶກສາຕອນປາຍ.

ນອກຈາກປະກາສະນິຍະບັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ ຍັງມີປະກາສະນິຍະບັດ ການສຶກສາສົງ ແລະ ການສຶກສານອກໂຮງຮຽນ.

ມາດຕາ 49 ໃບຢັ້ງຢືນການສຶກສາ

ໃບຢັ້ງຢືນການສຶກສາ ແມ່ນ ເອກະສານທາງການທີ່ອອກໃຫ້ນັກຮຽນທີ່ສຳເລັດການຮຽນໃນຂັ້ນໃດໜຶ່ງຂອງສະຖານສາມັນສຶກສາ ເພື່ອເປັນຫຼັກຖານຢັ້ງຢືນຜົນການຮຽນ.

ມາດຕາ 50 ການອອກປະກາສະນິຍະບັດ

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ກຳນົດລະບຽບການ ກ່ຽວກັບການອອກປະກາສະນິຍະບັດ ແຕ່ລະປະເພດ.

ຂະແໜງການສຶກສາທິການ ແລະ ກິລາ ເປັນຜູ້ອອກປະກາສະນິຍະບັດແຕ່ລະປະເພດ ຕາມການແບ່ງຂັ້ນຄຸ້ມຄອງ.

ມາດຕາ 51 ການທຽບ ຂັ້ນ, ຊັ້ນ

ການທຽບ ຂັ້ນ, ຊັ້ນ ແມ່ນ ການທຽບຢັ້ງຢືນຜົນການຮຽນຂອງນັກຮຽນໃນ ຂັ້ນ, ຊັ້ນ ຮຽນ ຕາມຫຼັກສູດສາມັນສຶກສາ ທັງໃນໂຮງຮຽນ ແລະ ນອກໂຮງຮຽນ.

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ອອກໃບຢັ້ງຢືນການທຽບ ຂັ້ນ, ຊັ້ນ ໃຫ້ນັກຮຽນ ທີ່ຈົບມາແຕ່ຕ່າງປະເທດ ໂດຍອີງໃສ່ໃບຢັ້ງຢືນການສຶກສາ ແລະ ປະກາສະນິຍະບັດ ຂອງປະເທດນັ້ນ ເພື່ອສືບຕໍ່ເຂົ້າຮຽນຢູ່ ສປປ ລາວ.

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ກຳນົດລະບຽບການກ່ຽວກັບການທຽບ ຂັ້ນ, ຊັ້ນ ໃນສາມັນສຶກສາ.

## ພາກທີ VI
## ການປະກັນຄຸນນະພາບສາມັນສຶກສາ

ມາດຕາ 52 ການປະກັນຄຸນນະພາບສາມັນສຶກສາ

ການປະກັນຄຸນນະພາບສາມັນສຶກສາ ແມ່ນ ການກຳນົດມາດຕະຖານ, ການຕິດຕາມ, ການປະເມີນ ແລະ ການກວດສອບຄຸນນະພາບສາມັນສຶກສາ ດ້ວຍກົນໄກການປະກັນຄຸນນະພາບ ພາຍໃນ ແລະ ພາຍນອກ.

ມາດຕາ 53 ຈຸດປະສົງການປະກັນຄຸນນະພາບສາມັນສຶກສາ

ຈຸດປະສົງການປະກັນຄຸນນະພາບສາມັນສຶກສາ ມີ ດັ່ງນີ້:

1. ເພື່ອຮັບປະກັນ ແລະ ຍົກສູງຄຸນນະພາບສາມັນສຶກສາ;

2. ເພື່ອຮັບຮູ້ລະດັບການບັນລຸຈຸດປະສົງສະຖານສາມັນສຶກສາ ແລະ ຫຼັກສູດ ໃນແຕ່ລະໄລຍະ;

3. ເພື່ອເປັນບ່ອນອີງໃຫ້ສະຖານສາມັນສຶກສາ ໃນການຊີ້ແຈງຕໍ່ພະແນກສຶກສາທິການ ແລະ ກິລາ ຂັ້ນແຂວງ, ຫ້ອງການສຶກສາທິການ ແລະ ກິລາ ຂັ້ນເມືອງ, ໜ່ວຍງານວັດທະນະທຳ-ສັງຄົມ ຕາແສງ, ພໍ່ ແມ່ ຫຼື ຜູ້ປົກຄອງ ນັກຮຽນ, ຊຸມຊົນ, ສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບຄຸນນະພາບຂອງສະຖານສາມັນສຶກສາ;

4. ເພື່ອເປັນພື້ນຖານໃຫ້ນັກຮຽນ ໃນການຕັດສິນໃຈເລືອກຮຽນໃນສະຖານສາມັນສຶກສາໃດໜຶ່ງ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ ຊຸມຊົນ ແລະ ສັງຄົມ.

ມາດຕາ 54 ຫຼັກການການປະກັນຄຸນນະພາບສາມັນສຶກສາ

ການປະກັນຄຸນນະພາບສາມັນສຶກສາ ມີຫຼັກການ ດັ່ງນີ້:

1. ຖືເອົາຄຸນນະພາບຂອງນັກຮຽນເປັນບຸລິມະສິດ;

2. ຮັບປະກັນລັກສະນະພາວະວິໄສ, ຊັດເຈນ ຖືເອົາຂໍ້ມູນເປັນບ່ອນອີງພື້ນຖານຂອງທຸກວຽກງານ;

3. ມີຄວາມ ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;

4. ຖືເປັນວຽກງານ ພາກບັງຄັບ, ເຄື່ອນໄຫວຢ່າງປົກກະຕິ, ຕໍ່ເນື່ອງ ແລະ ເປັນຮອບວຽນ ເພື່ອກ້າວສູ່ຄຸນນະພາບດີຂຶ້ນ;

5. ຮັບປະກັນຄຸນນະພາບຂອງ ຄູ, ຫຼັກສູດ, ໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ;

6. ຮັບປະກັນໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ມີສ່ວນຮ່ວມໃນຂະບວນການປະກັນຄຸນນະພາບສາມັນສຶກສາ.

ມາດຕາ 55 ກົນໄກການປະກັນຄຸນນະພາບສາມັນສຶກສາ

ກົນໄກການປະກັນຄຸນນະພາບ ແມ່ນ ຂັ້ນຕອນການດຳເນີນງານທີ່ມີການພົວພັນ ແລະ ເຊື່ອມໂຍງກັນຢ່າງເປັນລະບົບ ເປັນຕົ້ນ ການວາງແຜນ, ການຈັດຕັ້ງປະຕິບັດ, ການປະເມີນ, ການທົບທວນ ໂດຍນຳໃຊ້ບຸກຄະລາກອນ, ຊັບພະຍາກອນ, ຫຼັກການ, ມາດຕະການ, ທິດທາງປະຕິບັດ ແລະ ປັດໄຈທີ່ເປັນກົນໄກໃຫ້ແກ່ການດຳເນີນງານ ເພື່ອບັນລຸເປົ້າໝາຍ.

ກົນໄກການປະກັນຄຸນນະພາບສາມັນສຶກສາ ມີ ດັ່ງນີ້:

1. ການປະກັນຄຸນນະພາບການສຶກສາພາຍໃນ ແມ່ນ ການຕິດຕາມ ກວດກາ ແລະ ປະເມີນຜົນຄຸນນະພາບ ຕາມມາດຕະຖານຂອງກະຊວງສຶກສາທິການ ແລະ ກິລາ ໂດຍສະຖານສາມັນສຶກສາ ເປັນຜູ້ປະເມີນ;

2. ການປະກັນຄຸນນະພາບການສຶກສາພາຍນອກ ແມ່ນ ການຕິດຕາມ, ປະເມີນຜົນ ແລະ ກວດສອບຄຸນນະພາບ ຕາມມາດຕະຖານຂອງກະຊວງສຶກສາທິການ ແລະ ກິລາ ຫຼື ຂອງສາກົນ ໂດຍການຈັດຕັ້ງປະກັນຄຸນນະພາບພາຍນອກເປັນຜູ້ປະເມີນ.

ສຳລັບ ວິທີການ, ຂັ້ນຕອນ, ເງື່ອນໄຂ ແລະ ມາດຕະຖານກ່ຽວກັບການປະກັນຄຸນນະພາບການສຶກສາພາຍໃນ ແລະ ພາຍນອກ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 56 ມາດຕະການ ການປະກັນຄຸນນະພາບພາຍໃນ

ໃນການປະກັນຄຸນນະພາບພາຍໃນ ສະຖານສາມັນສຶກສາ ຕ້ອງມີຄະນະຮັບຜິດຊອບ ແລະ ກົນໄກການປະເມີນຄຸນນະພາບພາຍໃນຂອງຕົນ ຊຶ່ງເປັນການຈັດຕັ້ງທີ່ມີຄວາມເປັນເອກະລາດ ທາງດ້ານວິຊາການ ຢູ່ພາຍໃຕ້ການຊີ້ນຳ ໂດຍກົງຂອງຄະນະຜູ້ບໍລິຫານສະຖານສາມັນສຶກສານັ້ນ.

ສະຖານສາມັນສຶກສາ ຕ້ອງປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານການປະກັນຄຸນນະພາບສາມັນສຶກສາທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດ.

ມາດຕາ 57 ມາດຕະການການປະກັນຄຸນນະພາບພາຍນອກ

ໃນການປະກັນຄຸນນະພາບພາຍນອກ ສະຖານສາມັນສຶກສາ ຕ້ອງໄດ້ຮັບການປະເມີນພາຍນອກ ຢ່າງໜ້ອຍຫ້າປີ ຕໍ່ຄັ້ງ ຊຶ່ງດຳເນີນໂດຍການຈັດຕັ້ງທີ່ຢູ່ນອກ ຫຼື ບໍ່ຂຶ້ນກັບ ສະຖານສາມັນສຶກສານັ້ນ ເປັນຜູ້ປະເມີນເພື່ອຮັບຮອງຄຸນນະພາບ.

ສະຖານສາມັນສຶກສາ ທີ່ບໍ່ຜ່ານການຮັບຮອງຄຸນນະພາບ ຕ້ອງລາຍງານຄວາມຄືບໜ້າຂອງການປັບປຸງຄຸນນະພາບ ຕໍ່ກະຊວງສຶກສາທິການ ແລະ ກິລາ ຢ່າງໜ້ອຍ ປີລະຄັ້ງ.

ສະຖານສາມັນສຶກສາ ບໍ່ຜ່ານການປະເມີນພາຍນອກ ຕາມໄລຍະເວລາທີ່ກຳນົດ ຫຼື ຜົນການປະເມີນພາຍນອກ ບໍ່ຜ່ານເກນທີ່ກຳນົດ ຕ້ອງປັບປຸງຄຸນນະພາບສະຖານສາມັນສຶກສາຂອງຕົນ ຢ່າງຮີບດ່ວນ. ພາຍໃນເວລາ ສອງປີ ຖ້າບໍ່ມີຄວາມຄືບໜ້າໃນການປັບປຸງຄຸນນະພາບ ໃຫ້ປະຕິບັດຕາມມາດຕະຖານທີ່ໄດ້ກຳນົດໄວ້ໃນລະບຽບການ.

ມາດຕາ 58 ຄວາມຮັບຜິດຊອບຂອງສະຖານສາມັນສຶກສາ ກ່ຽວກັບການປະກັນຄຸນນະພາບສາມັນສຶກສາ

ສະຖານສາມັນສຶກສາ ມີຄວາມຮັບຜິດຊອບ ກ່ຽວກັບການປະກັນຄຸນນະພາບສາມັນສຶກສາ ດັ່ງນີ້:

1. ສ້າງລະບົບການປະກັນຄຸນນະພາບພາຍໃນ, ດຳເນີນການກວດສອບ ແລະ ປະເມີນຄຸນນະພາບພາຍໃນ ຕາມມາດຕະຖານທີ່ກະຊວງສຶກສາທິການ ແລະ ກິລາ ກຳນົດ;
2. ລາຍງານການປະກັນຄຸນນະພາບ ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ;
3. ຮັບຜິດຊອບ ແລະ ຍອມຮັບການກວດສອບ ແລະ ປະເມີນ ຕີລາຄາຂອງອົງການປະເມີນຄຸນນະພາບພາຍນອກ ຕໍ່ສະຖານສາມັນສຶກສາຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;
4. ວາງແຜນ ແລະ ກຳນົດໄລຍະເວລາ ເພື່ອດຳເນີນຂັ້ນຕອນການປະກັນຄຸນນະພາບພາຍໃນຂອງຕົນ;
5. ນຳໃຊ້ ແລະ ຜັນຂະຫຍາຍຜົນການປະເມີນ ຕີລາຄາການປະກັນຄຸນນະພາບ;
6. ເຜີຍແຜ່ຂໍ້ມູນ ກ່ຽວກັບຜົນການປະເມີນການປະກັນຄຸນນະພາບ ຕາມລະບຽບການ;
7. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ VII
# ນັກຮຽນ, ຄູ ແລະ ບຸກຄະລາກອນ ສາມັນສຶກສາ
## ໝວດທີ 1
## ນັກຮຽນສາມັນສຶກສາ

**ມາດຕາ 59 ນັກຮຽນສາມັນສຶກສາ**

ນັກຮຽນສາມັນສຶກສາ ແມ່ນ ຜູ້ກຳລັງຮຽນ ຢູ່ສະຖານສາມັນສຶກສາ ໃນໂຮງຮຽນ ແລະ ນອກໂຮງຮຽນ ຂອງລະບົບການສຶກສາແຫ່ງຊາດ.

**ມາດຕາ 60 ສິດ ຂອງນັກຮຽນສາມັນສຶກສາ**

ນັກຮຽນ ສາມັນສຶກສາ ມີສິດ ດັ່ງນີ້:

1. ໄດ້ຮັບຄວາມສະເໝີພາບໃນການຮຽນຮູ້, ຄົ້ນຄວ້າ ແລະ ສະແຫວງຫາຄວາມກ້າວໜ້າ;
2. ໄດ້ຮັບ ທຶນການສຶກສາ, ການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ;
3. ໄດ້ຮັບ ການສົ່ງເສີມສຸຂະພາບ, ໂພຊະນາການ ແລະ ປິ່ນປົວ ຂັ້ນພື້ນຖານ ໂດຍບໍ່ເສຍຄ່າ ສຳລັບການສຶກສາພາກບັງຄັບ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;
4. ໄດ້ຮັບການໂຈະການຮຽນ ຫຼື ຍົກຍ້າຍບ່ອນຮຽນ ໃນກໍລະນີຈຳເປັນ ໂດຍມີການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ;
5. ເຂົ້າເປັນສະມາຊິກຂອງອົງການຈັດຕັ້ງມະຫາຊົນ ຕາມລະບຽບການ;
6. ສະເໜີຄຳເຫັນ ຕໍ່ ຄູ, ບຸກຄະລາກອນສາມັນສຶກສາ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ກ່ຽວກັບຜົນການຮຽນ ແລະ ການປະພຶດ ພ້ອມທັງມີສ່ວນຮ່ວມໃນການພັດທະນາ ສະຖານສາມັນສຶກສາ;
7. ໄດ້ຮັບ ຂໍ້ມູນ ຂ່າວສານ, ເຂົ້າໃຊ້ບໍລິການຫ້ອງສະໝຸດ ແລະ ຫໍພິພິທະພັນ ໂດຍບໍ່ເສຍຄ່າ;
8. ໄດ້ຮັບໃບຢັ້ງຢືນການສຶກສາ ແລະ ປະກາສະນິຍະບັດ ເມື່ອສຳເລັດການສຶກສາ;
9. ໄດ້ຮັບການຫຼຸດຜ່ອນຄ່າເຂົ້າຊົມ ກິລາ-ກາຍຍະກຳ, ສະແດງສິລະປະ ແລະ ຄ່າເດີນທາງດ້ວຍພາຫະນະຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ;
10. ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 61 ພັນທະຂອງນັກຮຽນສາມັນສຶກສາ**

ນັກຮຽນສາມັນສຶກສາ ມີພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດຕາມ ກົດລະບຽບຂອງໂຮງຮຽນ, ກົດໝາຍ ແລະ ລະບຽບການ ກ່ຽວກັບສາມັນສຶກສາ ຢ່າງເຂັ້ມງວດ;
2. ຝຶກຝົນຫຼໍ່ຫຼອມ ແລະ ພັດທະນາຕົນເອງ ໃຫ້ມີຄວາມຮູ້, ຄວາມສາມາດ, ມີຄຸນສົມບັດ, ເອົາໃຈໃສ່ການຮຽນ ແລະ ຮຽນໃຫ້ສຳເລັດ ລວມທັງການຊອກຮູ້ ແລະ ເຂົ້າເຖິງແຫຼ່ງ ຂໍ້ມູນ ຂ່າວສານ ທີ່ກ່ຽວຂ້ອງ;
3. ເຄົາລົບ, ປະຕິບັດ ຄຳສັ່ງສອນ ຂອງ ຄູ, ບຸກຄະລາກອນການສຶກສາ ແລະ ພໍ່ ແມ່ ຫຼື ຜູ້ປົກຄອງ;

4. ເຄົາລົບ ແລະ ຮູ້ບຸນຄຸນ ຄູ, ພໍ່ ແມ່, ຜູ້ປົກຄອງ, ຜູ້ອຸປະກາລະຄຸນ, ຜູ້ນຳ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ຜູ້ອອກແຮງງານ;

5. ປົກປັກຮັກສາ ວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງ ຊາດ ແລະ ທ້ອງຖິ່ນ;

6. ເຂົ້າຮ່ວມການເຄື່ອນໄຫວກິດຈະກຳຕ່າງໆ ຂອງສະຖານສາມັນສຶກສາ ລວມທັງກິດຈະກຳປົກປັກຮັກສາສິ່ງແວດລ້ອມ ແລະ ສາທາລະນະປະໂຫຍດ;

7. ປົກປັກຮັກສາສະຖານສາມັນສຶກສາ ແລະ ນຳໃຊ້ອຸປະກອນການສຶກສາ, ສື່ການຮຽນ ແລະ ແຫຼ່ງຄວາມຮູ້ອື່ນ ລວມທັງເຕັກໂນໂລຊີ ແລະ ນະວັດຕະກຳ ການສຶກສາ;

8. ສາມັກຄີຊ່ວຍເຫຼືອ ຊຶ່ງກັນ ແລະ ກັນ ໃນການສຶກສາຮຽນຮູ້;

9. ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ໃນສະຖານສາມັນສຶກສາ ແລະ ສັງຄົມ;

10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 62 ນະໂຍບາຍຕໍ່ນັກຮຽນສາມັນສຶກສາ

ນັກຮຽນ ທີ່ມາຈາກຄອບຄົວທຸກຍາກ, ຜູ້ດ້ອຍໂອກາດ, ຜູ້ພິການ, ຜູ້ມີພອນສະຫວັນ ຫຼື ຮຽນເກັ່ງ, ເພດຍິງ ແລະ ເຜົ່າ ໄດ້ຮັບນະໂຍບາຍຕ່າງໆ ຕາມລະບຽບການ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ສັງຄົມ ມີສ່ວນຮ່ວມໃນການຊ່ວຍເຫຼືອນັກຮຽນ ດ້ວຍຮູບການທີ່ເໝາະສົມ ແລະ ສ້າງເງື່ອນໄຂໃຫ້ຜູ້ພິການໄດ້ເຂົ້າຮຽນຮ່ວມກັບນັກຮຽນປົກກະຕິ.

ລັດ ມີໜ້າທີ່ຈັດຕັ້ງ ແລະ ສ້າງເງື່ອນໄຂແກ່ຜູ້ມີບັນຫາໃຫ້ໄດ້ຮັບການສຶກສາ ແລະ ຝຶກອົບຮົມດ້ານວິຊາຊີບຕາມຄວາມເໝາະສົມ.

ນະໂຍບາຍຕໍ່ນັກຮຽນທີ່ໄດ້ຮັບປະກາສະນີຍະບັດແດງ, ນັກຮຽນເກັ່ງລະດັບຊາດ, ນັກຮຽນເກັ່ງລະດັບແຂວງ, ນັກຮຽນທີ່ເປັນ ນັກກິລາ-ກາຍຍະກຳ ແລະ ນັກສິລະປິນ ທີ່ມີຜົນງານດີເດັ່ນ, ນັກຮຽນທີ່ໄດ້ຮັບຫຼຽນໃນການແຂ່ງຂັນ ຈາກຕ່າງປະເທດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ສຳລັບນັກຮຽນທີ່ຮຽນສາມັນວິຊາຊີບ ໄດ້ຮັບນະໂຍບາຍສົ່ງເສີມ ເປັນຕົ້ນ ອຸປະກອນສຳລັບ ການຮຽນການສອນ, ເບ້ຍລ້ຽງ, ຫໍພັກນັກຮຽນ, ສິ່ງອຳນວຍຄວາມສະດວກທີ່ຈຳເປັນ.

## ໝວດທີ 2
## ຄູສາມັນສຶກສາ

ມາດຕາ 63 ຄູສາມັນສຶກສາ

ຄູສາມັນສຶກສາ ແມ່ນ ຜູ້ປະຕິບັດໜ້າທີ່ສິດສອນ, ຖ່າຍທອດຄວາມຮູ້, ສຶກສາອົບຮົມ, ຄົ້ນຄວ້າ, ວິໄຈ, ຊຸກຍູ້, ສົ່ງເສີມ, ອຳນວຍຄວາມສະດວກ ແລະ ຊ່ວຍເຫຼືອນັກຮຽນ ດ້ວຍຫຼາຍຮູບການ ຢູ່ສະຖານສາມັນສຶກສາທັງພາກລັດ ແລະ ເອກະຊົນ.

## ມາດຕາ 64 ມາດຕະຖານຂອງຄູສາມັນສຶກສາ

ຄູ ຕ້ອງມີມາດຕະຖານ ດັ່ງນີ້:

1. ມີຫຼັກໝັ້ນ, ທັດສະນະການເມືອງຖືກຕ້ອງ, ຮັກ ແລະ ປົກປ້ອງລະບອບປະຊາທິປະໄຕ ປະຊາຊົນ;
2. ມີຈັນຍາບັນຂອງຄູ ແລະ ມີຄຸນສົມບັດສົມທໍາປະຕິວັດ;
3. ມີຄວາມຮູ້, ຄວາມສາມາດ, ວິຊາສະເພາະ ໃນການສອນຢູ່ຊັ້ນຮຽນ ຕາມມາດຕະຖານຂອງກະຊວງ ສຶກສາທິການ ແລະ ກິລາ;
4. ມີປະກາສະນີຍະບັດ ຫຼື ໃບຢັ້ງຢືນວິຊາຄູ ແລະ/ຫຼື ໃບອະນຸຍາດການສອນ;
5. ມີຄວາມດຸໝັ່ນຊອກຮຽນຮູ້ ແລະ ພັດທະນາຕົນເອງ ຢ່າງບໍ່ຢຸດຢັ້ງ;
6. ມີສຸຂະພາບດີ.

## ມາດຕາ 65 ນາມມະຍົດ ແລະ ຕໍາແໜ່ງວິຊາການ ຂອງຄູສາມັນສຶກສາ

ຄູທີ່ໄດ້ສິດສອນໃນສະຖານສາມັນສຶກສາ ມີ ນາມມະຍົດ ແລະ ຕໍາແໜ່ງວິຊາການ ດັ່ງນີ້:

1. ນາມມະຍົດຄູ: ຄູແຫ່ງຊາດ ແລະ ຄູປະຊາຊົນ;
2. ຕໍາແໜ່ງວິຊາການຄູ: ຄູປະສົບການ, ຄູຊໍານານການ, ຄູຊ່ຽວຊານ ແລະ ຄູຊ່ຽວຊານອາວຸໂສ.

ໃນກໍລະນີຈໍາເປັນ ນາມມະຍົດຄູ ແລະ ຕໍາແໜ່ງວິຊາການຄູ ອາດມີການເພີ່ມເຕີມ ຫຼື ການປ່ຽນແປງ ຕາມການຕົກລົງຂອງລັດຖະບານ.

ສໍາລັບ ເງື່ອນໄຂ, ມາດຕະຖານ, ການຮັບຮອງ ແລະ ການຕົກລົງ ໃຫ້ ນາມມະຍົດ ແລະ ຕໍາແໜ່ງວິຊາການ ຂອງຄູ ຢູ່ສະຖານສາມັນສຶກສາ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ມາດຕາ 66 ສິດ ຂອງຄູສາມັນສຶກສາ

ຄູສາມັນສຶກສາ ມີສິດ ດັ່ງນີ້:

1. ສະເໜີຄໍາເຫັນ ກ່ຽວກັບການຄຸ້ມຄອງ, ການບໍລິຫານ, ການປັບປຸງ, ການພັດທະນາ ການຮຽນການສອນ ແລະ ສະຖານສາມັນສຶກສາ ລວມທັງການລາຍງານຜົນການເຄື່ອນໄຫວວຽກງານຂອງຕົນ ຕໍ່ຂັ້ນເທິງທີ່ຕົນຂຶ້ນກັບ;
2. ໄດ້ຮັບການຝຶກອົບຮົມ, ຍົກລະດັບຄວາມຮູ້ ທາງດ້ານວິຊາສະເພາະທີ່ຕົນສອນ ແລະ ສິ່ງທີ່ກ່ຽວຂ້ອງກັບການສອນໃຫ້ສູງຂຶ້ນ;
3. ໄດ້ຮັບການປົກປ້ອງສິດ, ຜົນປະໂຫຍດ ແລະ ກຽດສັກສີ ຂອງຕົນ;
4. ສະເໜີຂໍ ນາມມະຍົດ ແລະ ຕໍາແໜ່ງວິຊາການຄູ;
5. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 67 ໜ້າທີ່ ຂອງຄູສາມັນສຶກສາ

ຄູສາມັນສຶກສາ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ແຕ່ງ, ປັບປຸງ, ຮຽບຮຽງ ແຜນການສອນ, ບົດສອນ, ກຽມອຸປະກອນ ແລະ ສື່ການຮຽນການສອນ ໃຫ້ສອດຄ່ອງກັບຫຼັກສູດ ແລະ ສະພາບເງື່ອນໄຂຂອງແຕ່ລະທ້ອງຖິ່ນ ໃນແຕ່ລະໄລຍະ, ຄົ້ນຄວ້າ, ວິໄຈ ແລະ ບໍລິການ ທາງດ້ານວິຊາການແກ່ສັງຄົມ ຕາມລະບຽບການທີ່ກ່ຽວຂ້ອງ;
2. ສອນຕາມຫຼັກສູດ, ຕາມວິຊາສະເພາະ ຫຼື ຕາມການມອບໝາຍ;
3. ປົກປັກຮັກສາ ສິ່ງແວດລ້ອມ, ອາຄານສະຖານທີ່, ວັດຖຸປະກອນ ແລະ ສື່ການຮຽນ ການສອນ;
4. ເຂົ້າຮ່ວມການເຄື່ອນໄຫວກິດຈະກໍາ ຂອງສະຖານການສຶກສາ ແລະ ສັງຄົມ;
5. ຕິດຕາມ, ກວດກາ ເບິ່ງແຍງ ດູແລ ສຸຂະພາບ ແລະ ໂພຊະນາການ ຂອງນັກຮຽນ ຢ່າງໃກ້ຊິດ;
6. ຕິດຕາມ ກວດກາ, ວັດຜົນ ແລະ ປະເມີນຜົນ ນັກຮຽນ ຢ່າງຕໍ່ເນື່ອງ ແລະ ເປັນທໍາ;
7. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 68 ພັນທະ ຂອງຄູສາມັນສຶກສາ

ຄູສາມັນສຶກສາ ມີພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດຕາມ ລັດຖະທໍາມະນູນ, ກົດໝາຍ, ລະບຽບການ ແລະ ຈັນຍາບັນຂອງຄູ;
2. ເປັນແບບຢ່າງທີ່ດີ, ຮັກສາກຽດ ແລະ ສັກສີ ຂອງຄວາມເປັນຄູ;
3. ປະຕິບັດຕໍ່ນັກຮຽນ ຢ່າງເທົ່າທຽມ, ບໍາລຸງນັກຮຽນທີ່ມີຜົນການຮຽນຕໍ່າ ແລະ ສົ່ງເສີມຜູ້ຮຽນເກັ່ງ;
4. ເຄົາລົບ ແລະ ປົກປ້ອງສິດ ຜົນປະໂຫຍດອັນຊອບທໍາ ຂອງນັກຮຽນ;
5. ພັດທະນາວິຊາຊີບຄູແບບຕໍ່ເນື່ອງໃຫ້ມີ ຄວາມຮູ້, ຄວາມສາມາດ, ຄຸນສົມບັດສິນທໍາປະຕິວັດ ແລະ ເອົາໃຈໃສ່ໃນການສິດສອນ;
6. ສຶກສາອົບຮົມ, ປູກຈິດສໍານຶກໃຫ້ນັກຮຽນ ຮູ້ບຸນຄຸນ ຄູ, ພໍ່ ແມ່, ຜູ້ປົກຄອງ, ຜູ້ນໍາ ແລະ ຜູ້ອຸປະກາລະຄຸນ ລວມທັງການຮູ້ຮັກຊາດ, ວັດທະນະທໍາ ແລະ ຮີດຄອງປະເພນີອັນດີງາມຂອງ ຊາດ, ທ້ອງຖິ່ນ;
7. ນໍາໃຊ້ ແລະ ປົກປັກຮັກສາ ອາຄານ, ສະຖານທີ່, ວັດຖຸປະກອນ ແລະ ສື່ການຮຽນ ການສອນ;
8. ປົກປັກຮັກສາ ຄວາມສະຫງົບ, ຄວາມສະອາດສວຍງາມ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສະຖານສາມັນສຶກສາ;
9. ປະສານສົມທົບກັບ ພໍ່ ແມ່, ຜູ້ປົກຄອງ ແລະ ຄະນະພັດທະນາການສຶກສາແຕ່ລະຂັ້ນ;
10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 69 ການສ້າງ ແລະ ພັດທະນາ ຄູສາມັນສຶກສາ

ການສ້າງ ແລະ ພັດທະນາ ຄູສາມັນສຶກສາ ແມ່ນ ການຍົກລະດັບໃຫ້ຄູ ມີຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ຄວາມຮູ້ທາງດ້ານວິຊາສະເພາະ, ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກໍາ ແລະ ພາສາຕ່າງປະເທດ ໂດຍຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ ຕາມມາດຕະຖານການສຶກສາ.

ສະຖານສາມັນສຶກສາ, ການຈັດຕັ້ງ, ຊຸມຊົນ, ສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕ້ອງສ້າງເງື່ອນໄຂໃຫ້ຄູໄດ້ຮັບການບຳລຸງ ແລະ ຍົກລະດັບທາງດ້ານວິຊາສະເພາະ ຢ່າງຕໍ່ເນື່ອງ ແລະ ຍົກລະດັບທິດສະດີການເມືອງ.

### ມາດຕາ 70 ນະໂຍບາຍຕໍ່ຄູສາມັນສຶກສາ

ຄູສາມັນສຶກສາ ໄດ້ຮັບນະໂຍບາຍ ໃນການປະຕິບັດໜ້າທີ່, ຍົກລະດັບ ທິດສະດີ, ວິຊາສະເພາະ, ວິຊາການ, ຊີວິດການເປັນຢູ່ ແລະ ສະຖານະທາງສັງຄົມ, ໄດ້ຮັບການພັກຜ່ອນ, ລາພັກການ, ຮັບບຳເນັດ, ຮັບການອຸດໜູນວິຊາຊີບ ແລະ ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ສຳລັບ ນະໂຍບາຍຕໍ່ຄູສາມັນສຶກສາ ທີ່ໄປປະຕິບັດໜ້າທີ່ຢູ່ເຂດຫ່າງໄກສອກຫຼີກ ແລະ ທຸລະກັນດານ ລວມທັງຄູທີ່ສອນຫ້ອງຄວບ ແລະ ຄູທີ່ມີຕຳແໜ່ງວິຊາການ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 3
## ບຸກຄະລາກອນສາມັນສຶກສາ

### ມາດຕາ 71 ບຸກຄະລາກອນສາມັນສຶກສາ

ບຸກຄະລາກອນສາມັນສຶກສາ ແມ່ນ ຜູ້ປະຕິບັດໜ້າທີ່ຄຸ້ມຄອງ, ບໍລິຫານ, ຕິດຕາມ, ກວດກາ, ແນະນຳ, ຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການຮຽນ ການສອນ ຢູ່ສະຖານສາມັນສຶກສາ ທັງພາກລັດ ແລະ ເອກະຊົນ.

ສຳລັບ ສິດ, ໜ້າທີ່, ພັນທະ ແລະ ນະໂຍບາຍຂອງ ບຸກຄະລາກອນສາມັນສຶກສາ ໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍການສຶກສາ, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 72 ມາດຕະຖານຂອງບຸກຄະລາກອນ ສາມັນສຶກສາ

ມາດຕະຖານຂອງບຸກຄະລາກອນສາມັນສຶກສາ ໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ, ກົດໝາຍວ່າດ້ວຍການສຶກສາ ແລະ ລະບຽບການທີ່ກ່ຽວຂ້ອງ.

# ພາກທີ VIII
# ການ ອະນາໄມ, ສົ່ງເສີມສຸຂະພາບ ແລະ ໂພຊະນາການ ໃນສະຖານສາມັນສຶກສາ

### ມາດຕາ 73 ການອະນາໄມ ໃນສະຖານສາມັນສຶກສາ

ຂະແໜງການສຶກສາທິການ ແລະ ກິລາ ກຳນົດການອະນາໄມເຂົ້າໃນຫຼັກສູດສາມັນສຶກສາ ເພື່ອປູກຈິດສຳນຶກ ກ່ຽວກັບການຮັກສາຄວາມ ສະອາດ, ຈົບງາມ, ເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພ ລວມທັງການຊຸກຍູ້, ສົ່ງເສີມ ໃຫ້ຈັດຕັ້ງປະຕິບັດການອະນາໄມ ໃນສະຖານສາມັນສຶກສາ ເພື່ອສ້າງສະພາບແວດລ້ອມທີ່ອຳນວຍໃຫ້ແກ່ການຮຽນ ການສອນ, ຮັບປະກັນໃຫ້ ນັກຮຽນ, ຄູ ແລະ ບຸກຄະລາກອນການສຶກສາ ມີສຸຂະພາບດີ.

ສະຖານສາມັນສຶກສາ ຕ້ອງຈັດສັນໃຫ້ມີ ນ້ຳດື່ມ, ນ້ຳໃຊ້, ນ້ຳລ້າງມື, ຫ້ອງນ້ຳ, ວິດຖ່າຍ, ບ່ອນເກັບມ້ຽນ ແລະ ກຳຈັດຂີ້ເຫຍື້ອ ທີ່ຖືກຕ້ອງຕາມຫຼັກການສຸຂານາໄມ ເພື່ອອຳນວຍຄວາມສະດວກໃຫ້ນັກຮຽນ, ຄູ ແລະ ບຸກຄະລາກອນ ເປັນຕົ້ນ ແມ່ຍິງ, ເດັກນ້ອຍ, ຄົນພິການ.

### ມາດຕາ 74 ການສົ່ງເສີມສຸຂະພາບ ໃນສະຖານສາມັນສຶກສາ

ຂະແໜງການສຶກສາທິການ ແລະ ກິລາ ເປັນເຈົ້າການປະສານສົມທົບກັບ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຊຸກຍູ້, ສົ່ງເສີມ ສະຖານສາມັນສຶກສາ ໃນການໂຄສະນາ ເຜີຍແຜ່ ຂໍ້ມູນ ຂ່າວສານ, ໃຫ້ຄວາມຮູ້ກ່ຽວກັບ ການສົ່ງເສີມ, ຮັກສາສຸຂະພາບ, ທັກສະຊີວິດ ແລະ ເພດສຶກສາ ໃຫ້ແກ່ ນັກຮຽນ, ຄູ ແລະ ບຸກຄະລາກອນການສຶກສາ ຮູ້ຮັກສາສຸຂະພາບ, ມີຄວາມຮູ້ດ້ານເພດສຶກສາ ແລະ ມີແບບແຜນດຳລົງຊີວິດທີ່ດີ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ສົ່ງເສີມສຸຂະພາບໃນສະຖານສາມັນສຶກສາ ຕ້ອງຂໍອະນຸຍາດນຳຂະແໜງການສຶກສາທິການ ແລະ ກິລາ.

### ມາດຕາ 75 ການສົ່ງເສີມໂພຊະນາການ ໃນສະຖານສາມັນສຶກສາ

ຂະແໜງການສຶກສາທິການ ແລະ ກິລາ ເປັນເຈົ້າການປະສານສົມທົບກັບ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການເຊື່ອມສານວຽກງານໂພຊະນາການ ເຂົ້າໃນແຜນການ, ແຜນງານ ແລະ ໂຄງການ ຂອງວຽກງານສາມັນສຶກສາ ເພື່ອໃຫ້ນັກຮຽນ ມີສຸຂະພາບດີ, ມີການພັດທະນາທາງດ້ານ ຮ່າງກາຍ ແລະ ມັນສະໝອງ ກ້າວໄປສູ່ການຫຼຸດຜ່ອນການຂາດສານອາຫານ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງ ສົ່ງເສີມໂພຊະນາການໃນສະຖານສາມັນສຶກສາ ຕ້ອງຂໍອະນຸຍາດນຳຂະແໜງການສຶກສາທິການ ແລະ ກິລາ.

## ພາກທີ IX
## ພັນທະຕໍ່ວຽກງານສາມັນສຶກສາ

### ມາດຕາ 76 ພັນທະຂອງ ພົນລະເມືອງ

ພົນລະເມືອງ ທຸກຄົນ ມີພັນທະ ດັ່ງນີ້:

1. ຊຸກຍູ້, ສົ່ງເສີມ ແລະ ປະກອບ ທຶນ, ວັດຖຸປະກອນ ແລະ ເຫື່ອແຮງ ເຂົ້າໃນວຽກງານສາມັນສຶກສາ;
2. ສຶກສາອົບຮົມ, ຊ່ວຍເຫຼືອ ນັກຮຽນ ໃຫ້ເປັນພົນລະເມືອງດີ, ມີຄຸນສົມບັດ, ມີຄວາມມັກຮັກການຮຽນ, ຢູ່ຫ່າງໄກຈາກ ສິ່ງເສບຕິດ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ;
3. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 77 ພັນທະຂອງ ພໍ່ ແມ່ ຫຼື ຜູ້ປົກຄອງ ນັກຮຽນ

ພໍ່ ແມ່ ຫຼື ຜູ້ປົກຄອງ ນັກຮຽນ ມີພັນທະ ດັ່ງນີ້:

1. ສົ່ງ ລູກ, ຫຼານ ຂອງຕົນ ທີ່ມີເກນອາຍຸເຂົ້າຮຽນໃຫ້ໄປເຂົ້າໂຮງຮຽນ ແລະ ຮຽນຈົນຈົບສາມັນສຶກສາ ໂດຍສະເພາະການສຶກສາພາກບັງຄັບ ແລະ ບໍ່ໃຫ້ປະລະການຮຽນ;

2. ສຶກສາ ອົບຮົມ ລູກ, ຫຼານ ຂອງຕົນ ໃຫ້ເປັນພົນລະເມືອງດີ, ມີຄຸນສົມບັດ ແລະ ມີຄວາມມັກຮັກການຮຽນ ພ້ອມທັງຕິດຕາມຜົນການຮຽນຂອງ ລູກ, ຫຼານ ຂອງຕົນນໍາຄູ;

3. ອໍານວຍຄວາມສະດວກໃຫ້ແກ່ ລູກ, ຫຼານ ຂອງຕົນ ໄດ້ຮັບການສຶກສາທີ່ດີ ແລະ ເຂົ້າຮ່ວມກິດຈະກໍາຕ່າງໆຂອງໂຮງຮຽນ;

4. ມີສ່ວນຮ່ວມ ໃນວຽກງານສາມັນສຶກສາ, ປຸກສ້າງ, ປົກປັກຮັກສາ ແລະ ບູລະນະໂຮງຮຽນ ລວມທັງການສະໜັບສະໜູນ ທຶນ, ອຸປະກອນ ແລະ ອາຫານ ໃນໂຮງຮຽນ;

5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ມາດຕາ 78 ພັນທະຂອງ ຊຸມຊົນ ແລະ ສັງຄົມ

ຊຸມຊົນ ແລະ ສັງຄົມ ມີພັນທະ ດັ່ງນີ້:

1. ປຸກລະດົມ, ຊຸກຍູ້ ພໍ່ ແມ່ ຫຼື ຜູ້ປົກຄອງ ທີ່ມີ ລູກ, ຫຼານ ໃນເກນອາຍຸເຂົ້າຮຽນໃຫ້ໄປຮຽນ;

2. ສຶກສາອົບຮົມນັກຮຽນ ໃຫ້ເປັນພົນລະເມືອງດີ, ມີຄຸນສົມບັດ, ມີຄວາມມັກຮັກການຮຽນ, ຢູ່ຫ່າງໄກຈາກ ສິ່ງເສບຕິດ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ;

3. ອໍານວຍຄວາມສະດວກໃຫ້ແກ່ ນັກຮຽນ, ຄູ ແລະ ບຸກຄະລາກອນສາມັນສຶກສາ ລວມທັງໃຫ້ການຊ່ວຍເຫຼືອ ແລະ ອໍານວຍຄວາມສະດວກ ແກ່ການຝຶກປະຕິບັດຕົວຈິງ ຂອງນັກຮຽນ;

4. ເຄົາລົບ, ຊ່ວຍເຫຼືອ ແລະ ເບິ່ງແຍງຊີວິດການເປັນຢູ່ ຂອງຄູ;

5. ຕິດຕາມ ການຮຽນຂອງນັກຮຽນ, ການສອນ ແລະ ການປະຕິບັດໜ້າທີ່ອື່ນຂອງ ຄູ ແລະ ບຸກຄະລາກອນ ສາມັນສຶກສາ;

6. ມີສ່ວນຮ່ວມໃນການ ປຸກສ້າງ, ປົກປັກຮັກສາ ແລະ ບູລະນະໂຮງຮຽນ ລວມທັງການປະກອບສ່ວນທຶນ, ວັດຖຸປະກອນ ແລະ ເຫື່ອແຮງ ເຂົ້າໃນວຽກງານສາມັນສຶກສາ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ມາດຕາ 79 ພັນທະຂອງ ຫົວໜ່ວຍແຮງງານ, ຜູ້ດໍາເນີນທຸລະກິດ ແລະ ສື່ມວນຊົນ

ຫົວໜ່ວຍແຮງງານ ແລະ ຜູ້ດໍາເນີນທຸລະກິດ ມີພັນທະ ດັ່ງນີ້:

1. ໃຫ້ການຮ່ວມມື, ອໍານວຍຄວາມສະດວກ ແລະ ສະໜັບສະໜູນ ຄູ, ນັກຮຽນ ໃນການສຶກສາຄົ້ນຄວ້າ, ທັດສະນະສຶກສາ ແລະ ຝຶກງານ ຢູ່ບ່ອນປະກອບການຂອງຕົນ;

2. ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ຜູ້ຮຽນທີ່ມີເກນອາຍຸອອກແຮງງານ ໄດ້ເຮັດວຽກຕາມທີ່ໄດ້ກໍານົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ;

3. ມີສ່ວນຮ່ວມ ແລະ ປະກອບສ່ວນ ທຶນ ແລະ ວັດຖຸປະກອນ ເຂົ້າໃນວຽກງານສາມັນສຶກສາ;

4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ສື່ມວນຊົນ ມີພັນທະ ດັ່ງນີ້:

1. ສຶກສາອົບຮົມ ນັກຮຽນ ໃຫ້ເປັນພົນລະເມືອງດີ, ມີຄຸນສົມບັດ, ມີຄວາມມັກຮັກການຮຽນ, ຫ່າງໄກຈາກ ສິ່ງເສບຕິດ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າ;

2. ໂຄສະນາ ເຜີຍແຜ່ ວຽກງານສາມັນສຶກສາ ຜ່ານສື່ມວນຊົນ ດ້ວຍຫຼາຍຮູບການ;

3. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ X
# ການລົງທຶນໃສ່ວຽກງານສາມັນສຶກສາ
## ໝວດທີ 1
## ການລົງທຶນພາກລັດ

### ມາດຕາ 80 ການລົງທຶນພາກລັດ

ລັດ ລົງທຶນໃສ່ວຽກງານສາມັນສຶກສາ ດ້ວຍການສະໜອງງົບປະມານ ເພື່ອກໍ່ສ້າງໂຄງລ່າງພື້ນຖານ, ສ້າງ ບຳລຸງຍົກລະດັບ ຄູ, ບຸກຄະລາກອນສາມັນສຶກສາ, ສະໜອງວັດຖຸປະກອນ, ຕຳລາ ແລະ ເອກະສານ ການຮຽນ ການສອນ, ສິ່ງອຳນວຍຄວາມສະດວກອື່ນ, ສົ່ງເສີມການພັດທະນາວິຊາການໃຫ້ທັນສະໄໝໃນວຽກງານ ສາມັນສຶກສາ ລວມທັງວຽກງານອະນາໄມ, ສົ່ງເສີມສຸຂະພາບ ແລະ ໂພຊະນາການ.

### ມາດຕາ 81 ທຶນ ຂອງສະຖານສາມັນສຶກສາພາກລັດ

ທຶນຂອງສະຖານສາມັນສຶກສາພາກລັດ ມີ ດັ່ງນີ້:

1. ງົບປະມານຂອງລັດ;
2. ການຊ່ວຍເຫຼືອລ້າ ແລະ ການກູ້ຢືມ ຈາກ ອົງການຈັດຕັ້ງສັງຄົມ ທັງພາຍໃນ ແລະ ຕ່າງປະເທດ;
3. ການຊຸກຍູ້, ສົ່ງເສີມຈາກບຸກຄົນ, ນິຕິບຸກຄົນ, ຊຸມຊົນ ແລະ ຄອບຄົວ;
4. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

## ໝວດທີ 2
## ການລົງທຶນພາກເອກະຊົນ

### ມາດຕາ 82 ການລົງທຶນພາກເອກະຊົນ

ການລົງທຶນພາກເອກະຊົນ ແມ່ນ ການລົງທຶນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນໃສ່ສາມັນສຶກສາ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບ ການ ຂອງກະຊວງສຶກສາທິການ ແລະ ກິລາ.

ສຳລັບ ນະໂຍບາຍສົ່ງເສີມ, ຮູບການ ແລະ ຂັ້ນຕອນ ຂອງການລົງທຶນພາກເອກະຊົນ ໃຫ້ປະຕິບັດຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍອື່ນ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 83 ຄ່າບໍລິການ ແລະ ຄ່າຮຽນ

ຄ່າບໍລິການ ແລະ ຄ່າຮຽນ ຢູ່ສະຖານສາມັນສຶກສາເອກະຊົນ ໃຫ້ປະຕິບັດຕາມການກຳນົດຂອງສະຖານສາມັນສຶກສາເອກະຊົນ ພາຍໃຕ້ການຄຸ້ມຄອງຂອງລັດ ແລະ ຕ້ອງແຈ້ງ ຄ່າບໍລິການ ແລະ ຄ່າຮຽນ ໃຫ້ນັກຮຽນ, ພໍ່ ແມ່ ຫຼື ຜູ້ປົກຄອງ ຮູ້ລ່ວງໜ້າ ຢ່າງໜ້ອຍ ສາມສິບວັນ ກ່ອນການເປີດສົກຮຽນ ຂອງທຸກປີ.

## ພາກທີ XI
## ຂໍ້ຫ້າມ

### ມາດຕາ 84 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ເຄື່ອນໄຫວທີ່ເປັນການແຕະຕ້ອງກຽດສັກສີ, ໃສ່ຮ້າຍປ້າຍສີບຸກຄະລາກອນ, ບົດບາດຂອງຄູ ແລະ ນັກຮຽນຢູ່ສະຖານສາມັນສຶກສາ;
2. ກີດຂວາງການເຂົ້າຮຽນ ແລະ ສ້າງສິ່ງຈູງໃຈໃຫ້ເດັກປະລະການຮຽນ;
3. ໂຄສະນາຊວນເຊື່ອ ກ່ຽວກັບ ວຽກງານສາມັນສຶກສາ ທີ່ເກີນຄວາມເປັນຈິງ;
4. ຍຸຍົງ ສົ່ງເສີມ ຫຼື ພົວພັນ, ບໍລິການ, ຊື້ ຂາຍ, ເສບ ສິ່ງເສບຕິດ ເຊັ່ນ ຢາສູບ, ຢາສູບໄຟຟ້າ, ປູມເປົ້າທີ່ມີສານເສບຕິດ, ນໍ້າກະທ່ອມ, ສິ່ງມຶນເມົາ, ສິ່ງລາມົກ ອະນາຈານ, ຫຼິ້ນການພະນັນທຸກປະເພດ, ບໍລິການບັນເທີງ ແລະ ສິ່ງສຽງດັງເປັນການລົບກວນການຈັດການຮຽນ ການສອນໃນສະຖານສາມັນສຶກສາ;
5. ຈຳໜ່າຍ ຫຼື ຂາຍ ເຄື່ອງດື່ມທີ່ມີທາດເຫຼົ້າ, ຢາສູບ ໃຫ້ນັກຮຽນທີ່ມີອາຍຸຕໍ່າກວ່າ ສິບແປດປີ;
6. ຊຸກຍູ້, ສົ່ງເສີມໃຫ້ນັກຮຽນລະເມີດກົດໝາຍ ແລະ ກົດລະບຽບຂອງສະຖານສາມັນສຶກສາ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 85 ຂໍ້ຫ້າມສຳລັບສະຖານສາມັນສຶກສາ

ຫ້າມ ສະຖານສາມັນສຶກສາ ມີພຶດຕິກຳ ດັ່ງນີ້:

1. ໂອນ ແລະ ແລກປ່ຽນອາຄານ ຫຼື ສິດນຳໃຊ້ທີ່ດິນ ແລະ ຊັບສິນອື່ນ ຂອງສະຖານສາມັນສຶກສາ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການສຶກສາທິການ ແລະ ກິລາ;
2. ນຳໃຊ້ເປັນບ່ອນດຳເນີນທຸລະກິດທີ່ເປັນຜົນກະທົບຕໍ່ການຮຽນ ການສອນ;
3. ກຳນົດ ຄ່າທຳນຽມ, ຄ່າຮຽນ ແລະ ຄ່າບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການສຶກສາທິການ ແລະ ກິລາ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 86 ຂໍ້ຫ້າມ ສຳລັບ ຄູສາມັນສຶກສາ

ຫ້າມ ຄູສາມັນສຶກສາ ມີພຶດຕິກຳ ດັ່ງນີ້:

1. ກົດໜ່ວງ, ຖ່ວງດຶງ, ປອມແປງ ເອກະສານ, ບິດເບືອນຂໍ້ມູນ ກ່ຽວກັບເອກະສານການຮຽນ ການສອນ;

2. ທຸດຈະລິດໃນການຈັດຕັ້ງການຮຽນ ການສອນ, ເລື່ອນຂັ້ນ, ເລື່ອນຊັ້ນ, ສອບເສັງຈົບຊັ້ນ ແລະ ສອບເສັງນັກຮຽນເກັ່ງ ສາມັນສຶກສາ;

3. ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ ຕໍ່ການສິດສອນ;

4. ສວຍໃຊ້ໜ້າທີ່, ໃຫ້ ຫຼື ຮັບ ສິນບົນ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ, ຈຸ້ມເຈື້ອ, ກຸ່ມກ້ອນ ແລະ ພັກພວກຂອງຕົນ;

5. ຊັກຈູງ ຫຼື ບັງຄັບ ນັກຮຽນທີ່ຕົນເອງສອນມາຮຽນເພີ່ມນຳ;

6. ນາບຂູ່, ທຸບຕີ, ຮ້າຍດ່າ, ຫາລຸນ ແລະ ລຳອຽງ ຕໍ່ນັກຮຽນ ລວມທັງການໃສ່ລະບຽບເກີນຂອບເຂດ;

7. ແບ່ງແຍກຄວາມສາມັກຄີ ຫຼື ສ້າງຄວາມປັ່ນປ່ວນພາຍໃນ ສະຖານສາມັນສຶກສາ ແລະ ສັງຄົມ;

8. ພົວພັນຊູ້ສາວ ທີ່ຂັດກັບ ກົດໝາຍ, ກົດລະບຽບຂອງສະຖານການສຶກສາ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງ ຊາດ ແລະ ທ້ອງຖິ່ນ;

9. ລ່ວງລະເມີດທາງເພດ, ເປີດເຜີຍ ຫຼື ເຜີຍແຜ່ສິ່ງລາມົກ ອະນາຈານ;

10. ນຸ່ງເຄື່ອງແບບຄູ ເຂົ້າໃນຮ້ານບັນເທີງ ຫຼື ສະຖານທີ່ອື່ນທີ່ບໍ່ເໝາະສົມ;

11. ໂຄສະນາ ສົ່ງເສີມ ຫຼື ດື່ມ ເຄື່ອງດື່ມທີ່ມີທາດເຫຼົ້າໃນສະຖານສາມັນສຶກສາ;

12. ຊຸກຍູ້, ສົ່ງເສີມ ໃຫ້ນັກຮຽນກະທຳຜິດຕໍ່ຮີດຄອງປະເພນີ, ກົດລະບຽບຂອງສະຖານສາມັນສຶກສາ;

13. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 87 ຂໍ້ຫ້າມສຳລັບບຸກຄະລາກອນສາມັນສຶກສາ**

ຫ້າມ ບຸກຄະລາກອນສາມັນສຶກສາ ມີພຶດຕິກຳ ດັ່ງນີ້:

1. ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານ ຂອງຕົນ;

2. ກົດໜ່ວງ ຖ່ວງດຶງ, ປອມແປງ ເອກະສານ, ບິດເບືອນຂໍ້ມູນ ກ່ຽວກັບເອກະສານການຮຽນ, ໃບຢັ້ງຢືນການຮຽນ, ທຽບຂັ້ນ ຫຼື ຊັ້ນ ແລະ ປະກາສະນີຍະບັດ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

3. ສໍ້ລາດບັງຫຼວງ, ສວຍໃຊ້ໜ້າທີ່ຕຳແໜ່ງ, ຮັບ ແລະ ໃຫ້ສິນບົນ, ເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ, ຈຸ້ມເຈື້ອ ແລະ ພັກພວກຂອງຕົນ;

4. ທຸດຈະລິດໃນການຈັດການຮຽນ ການສອນ ແລະ ການສອບເສັງ;

5. ສ້າງກຸ່ມກ້ອນ, ພັກພວກ ເພື່ອແບ່ງແຍກຄວາມສາມັກຄີ ຫຼື ສ້າງຄວາມບໍ່ສະຫງົບໃນສະຖານສາມັນສຶກສາ ແລະ ສັງຄົມ;

6. ພົວພັນຊູ້ສາວ ທີ່ຂັດກັບ ກົດໝາຍ, ກົດລະບຽບຂອງສະຖານການສຶກສາ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງ ຊາດ ແລະ ທ້ອງຖິ່ນ;

7. ລ່ວງລະເມີດທາງເພດ, ເປີດເຜີຍ ຫຼື ເຜີຍແຜ່ ສິ່ງລາມົກ ອະນາຈານ;

8. ໂຄສະນາ ສົ່ງເສີມ ຫຼື ດື່ມ ເຄື່ອງດື່ມທີ່ມີທາດເຫຼົ້າໃນສະຖານສາມັນສຶກສາ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 88 ຂໍ້ຫ້າມສຳລັບນັກຮຽນ**

ຫ້າມ ນັກຮຽນ ມີພຶດຕິກຳ ດັ່ງນີ້:

1. ລະເມີດ ກົດລະບຽບ ຂອງສະຖານສາມັນສຶກສາ;
2. ໃຫ້ສິນບົນແກ່ຄູ ແລະ ບຸກຄະລາກອນ ສາມັນສຶກສາ;
3. ທຸດຈະລິດໃນ ການຮຽນ, ການສອບເສັງ;
4. ພົວພັນຊູ້ສາວ ທີ່ຂັດກັບ ກົດໝາຍ, ກົດລະບຽບຂອງສະຖານການສຶກສາ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ແລະ ທ້ອງຖິ່ນ;
5. ຄອບຄອງອາວຸດ, ວັດຖຸລະເບີດ ແລະ ເຄມີ ທີ່ຕ້ອງຫ້າມ;
6. ສ້າງກຸ່ມກ້ອນ, ພັກພວກ ເພື່ອກໍ່ຄວາມບໍ່ສະຫງົບ ຢູ່ໃນສະຖານສາມັນສຶກສາ ແລະ ສັງຄົມ;
7. ເຍາະເຍີ້ຍ, ສຽດສີ, ດູຖູກ, ຢຽບຢ່ຳ ນັກຮຽນ ດ້ວຍກັນ ແລະ ຄູ;
8. ຫຼິ້ນເກມເອເລັກໂຕຣນິກ ນອກຫຼັກສູດການຮຽນ ການສອນ ໃນເວລາເຂົ້າໂຮງຮຽນ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ XII
## ການຄຸ້ມຄອງ ແລະ ການກວດກາ ວຽກງານສາມັນສຶກສາ
### ໝວດທີ 1
### ການຄຸ້ມຄອງວຽກງານສາມັນສຶກສາ

**ມາດຕາ 89 ອົງການຄຸ້ມຄອງວຽກງານສາມັນສຶກສາ**

ລັດຖະບານ ຄຸ້ມຄອງວຽກງານສາມັນສຶກສາ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານສາມັນສຶກສາ ປະກອບດ້ວຍ:

1. ກະຊວງສຶກສາທິການ ແລະ ກິລາ;
2. ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ, ແຂວງ;
3. ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ;
4. ໜ່ວຍງານວັດທະນະທຳ-ສັງຄົມ ຕາແສງ.

ນອກຈາກ ອົງການຄຸ້ມຄອງວຽກງານສາມັນສຶກສານີ້ແລ້ວ ຍັງມີສະຖານສາມັນສຶກສາ ທີ່ເຮັດໜ້າທີ່ຄຸ້ມຄອງວຽກງານຂອງຕົນ.

**ມາດຕາ 90 ສິດ ແລະ ໜ້າທີ່ ຂອງກະຊວງສຶກສາທິການ ແລະ ກິລາ**

ໃນການຄຸ້ມຄອງວຽກງານສາມັນສຶກສາ ກະຊວງສຶກສາທິການ ແລະ ກິລາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສາມັນສຶກສາ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ເປັນ ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສາມັນສຶກສາ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສາມັນສຶກສາ;

4. ສ້າງ, ພັດທະນາ ຫຼັກສູດສາມັນສຶກສາ, ອຸປະກອນ, ສື່ການຮຽນ ການສອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ;

5. ຄຸ້ມຄອງການຮຽນ ການສອນ ຂອງສະຖານສາມັນສຶກສາ;

6. ຄົ້ນຄວ້າ, ວິໄຈ ແລະ ປະເມີນ ຜົນການຮຽນ ການສອນ ສາຍສາມັນສຶກສາ ລວມທັງການປະກັນຄຸນນະພາບສາມັນສຶກສາ;

7. ຊີ້ນຳການປະຕິບັດການສຶກສາພາກບັງຄັບ ແລະ ການລຶບລ້າງຄວາມບໍ່ຮູ້ໜັງສື ແລະ ຍົກລະດັບການສຶກສາ ຕິດພັນກັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ;

8. ຄົ້ນຄວ້າ ພິຈາລະນາ ການສ້າງຕັ້ງ, ຂະຫຍາຍ, ໂຮມ, ແຍກ, ໂຈະ ຫຼື ຍຸບເລີກ ສະຖານສາມັນສຶກສາ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;

9. ຄຸ້ມຄອງ ແລະ ອອກ ໃບຢັ້ງຢືນການທຽບ ຂັ້ນ, ຊັ້ນ ແລະ ປະກາສະນີຍະບັດ ສຳລັບນັກຮຽນສາມັນສຶກສາ ທີ່ໃຊ້ຫຼັກສູດນານາຊາດ ແລະ ນັກຮຽນທີ່ມາຈາກຕ່າງປະເທດ;

10. ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານສາມັນສຶກສາ ໃນຂອບເຂດທົ່ວປະເທດ;

11. ສ້າງ, ບຳລຸງ, ນຳໃຊ້ ແລະ ຄຸ້ມຄອງ ຄູ, ບຸກຄະລາກອນ ສາມັນສຶກສາ;

12. ຄົ້ນຄວ້າ ພິຈາລະນາ ຕຳແໜ່ງວິຊາການຄູສາມັນສຶກສາ;

13. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານສາມັນສຶກສາ;

14. ປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານສາມັນສຶກສາ;

15. ພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສາມັນສຶກສາ;

16. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານສາມັນສຶກສາຕໍ່ລັດຖະບານ ຢ່າງເປັນປົກກະຕິ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 91 ສິດ ແລະ ໜ້າທີ່ ຂອງພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ, ແຂວງ

ໃນການຄຸ້ມຄອງວຽກງານສາມັນສຶກສາ ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ, ແລະ ໂຄງການ ກ່ຽວກັບວຽກງານສາມັນສຶກສາ;
2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສາມັນສຶກສາ;
3. ຈັດຕັ້ງປະຕິບັດ ການສຶກສາພາກບັງຄັບ, ການລຶບລ້າງຄວາມບໍ່ຮູ້ໜັງສື ແລະ ຍົກລະດັບການສຶກສາ ຕິດພັນກັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ;
4. ສະເໜີ ສ້າງ, ພັດທະນາ ຫຼັກສູດທ້ອງຖິ່ນ, ອຸປະກອນ, ສື່ການຮຽນ ການສອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ;
5. ຄົ້ນຄວ້າ, ວິໄຈ ແລະ ປະເມີນ ຜົນການຮຽນ ການສອນ ສາຍສາມັນສຶກສາ ລວມທັງການປະກັນຄຸນນະພາບສາມັນສຶກສາ;
6. ຄົ້ນຄວ້າ ພິຈາລະນາ ການສ້າງຕັ້ງ, ຂະຫຍາຍ, ໂຮມ, ແຍກ, ໂຈະ ຫຼື ຍຸບເລີກ ສະຖານສາມັນສຶກສາ;
7. ຄຸ້ມຄອງ ໂຮງຮຽນມັດທະຍົມຕອນປາຍ, ໂຮງຮຽນມັດທະຍົມສົມບູນ ແລະ ໂຮງຮຽນສາມັນວິຊາຊີບ ຕາມລະບຽບການ;
8. ຄຸ້ມຄອງ ແລະ ອອກ ໃບຄະແນນ ແລະ ປະກາສະນີຍະບັດ ຈົບຊັ້ນມັດທະຍົມຕອນປາຍ;
9. ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານສາມັນສຶກສາ;
10. ສະເໜີ ສ້າງ, ບຳລຸງ, ນຳໃຊ້ ແລະ ຄຸ້ມຄອງ ຄູ, ບຸກຄະລາກອນ ສາມັນສຶກສາ;
11. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານສາມັນສຶກສາ;
12. ປະສານສົມທົບກັບ ພະແນກການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານສາມັນສຶກສາ;
13. ພົວພັນ ຮ່ວມມືກັບ ຕ່າງປະເທດກ່ຽວກັບວຽກງານສາມັນສຶກສາ ຕາມການມອບໝາຍ;
14. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານສາມັນສຶກສາ ຕໍ່ກະຊວງສຶກສາທິການ ແລະ ກິລາ ແລະ ຄະນະກຳມະການປົກຄອງ ຂັ້ນແຂວງ ຢ່າງເປັນປົກກະຕິ;
15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 92 ສິດ ແລະ ໜ້າທີ່ ຂອງຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ

ໃນການຄຸ້ມຄອງວຽກງານສາມັນສຶກສາ ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສາມັນສຶກສາ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສາມັນສຶກສາ;

3. ຈັດຕັ້ງປະຕິບັດ ການສຶກສາພາກບັງຄັບ, ການລຶບລ້າງຄວາມບໍ່ຮູ້ໜັງສື ແລະ ຍົກລະດັບການສຶກສາ ຕິດພັນກັບການຝຶກອົບຮົມວິຊາຊີບຂັ້ນພື້ນຖານ;

4. ສະເໜີ ສ້າງ, ພັດທະນາ ຫຼັກສູດທ້ອງຖິ່ນ, ອຸປະກອນ, ສື່ການຮຽນ ການສອນ ແລະ ສິ່ງອໍານວຍຄວາມສະດວກຕ່າງໆ;

5. ຄຸ້ມຄອງ ໂຮງຮຽນປະຖົມ ແລະ ໂຮງຮຽນມັດທະຍົມຕອນຕົ້ນ ຕາມລະບຽບການ;

6. ຄົ້ນຄວ້າ, ວິໄຈ ແລະ ປະເມີນ ຜົນການຮຽນ ການສອນ ສາຍສາມັນສຶກສາ ລວມທັງການປະກັນຄຸນນະພາບສາມັນສຶກສາ;

7. ສະເໜີ ການສ້າງຕັ້ງ, ຂະຫຍາຍ, ໂຮມ, ແຍກ, ໂຈະ ຫຼື ຍຸບເລີກ ສະຖານສາມັນສຶກສາ;

8. ຄຸ້ມຄອງ ແລະ ອອກ ໃບຄະແນນ ແລະ ປະກາສະນີຍະບັດ ຊັ້ນ ປະຖົມສຶກສາ ແລະ ມັດທະຍົມຕອນຕົ້ນ;

9. ສະເໜີຕໍາແໜ່ງວິຊາການຄູສາມັນສຶກສາ;

10. ຊີ້ນໍາ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານສາມັນສຶກສາ;

11. ສະເໜີ ສ້າງ, ບໍາລຸງ, ນໍາໃຊ້ ແລະ ຄຸ້ມຄອງ ຄູ, ບຸກຄະລາກອນ ສາມັນສຶກສາ;

12. ຮັບ, ພິຈາລະນາ ແລະ ແກ້ໄຂ ຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານສາມັນສຶກສາ;

13. ປະສານສົມທົບກັບ ຫ້ອງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານສາມັນສຶກສາ;

14. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານສາມັນສຶກສາ ຕໍ່ພະແນກສຶກສາທິການ ແລະ ກິລາ ຂັ້ນແຂວງ ແລະ ຄະນະກໍາມະການປົກຄອງ ຂັ້ນເມືອງ ຢ່າງເປັນປົກກະຕິ;

15. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 93 ສິດ ແລະ ໜ້າທີ່ຂອງໜ່ວຍງານວັດທະນະທໍາ-ສັງຄົມ ຕາແສງ

ໃນການຄຸ້ມຄອງວຽກງານສາມັນສຶກສາ ໜ່ວຍງານວັດທະນະທໍາ-ສັງຄົມ ຕາແສງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສາມັນສຶກສາ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສາມັນສຶກສາ;

3. ຊຸກຍູ້ຄະນະພັດທະນາການສຶກສາ ແລະ ປຸກລະດົມຂົນຂວາຍ ພໍ່ ແມ່, ຜູ້ປົກຄອງ ໃຫ້ນໍາສົ່ງເດັກໃນເກນອາຍຸ ເຂົ້າຮຽນ ແລະ ຮຽນຈົບການສຶກສາພາກບັງຄັບ ໂດຍບໍ່ໃຫ້ປະລະການຮຽນ;

4. ຕິດຕາມ ການຮຽນຂອງນັກຮຽນ ການສອນ ແລະ ການປະຕິບັດໜ້າທີ່ອື່ນຂອງ ຄູ ແລະ ບຸກຄະລາກອນ ສາມັນສຶກສາ;

5. ຊ່ວຍເຫຼືອ ແລະ ເບິ່ງແຍງ ຄູ ແລະ ສ້າງເງື່ອນໄຂໃຫ້ຄູ ທີ່ຢູ່ໃນເຂດຫຍຸ້ງຍາກ ສາມາດປະຕິບັດໜ້າທີ່ ຈົນສຳເລັດ ຕາມການມອບໝາຍຂອງຂັ້ນເທິງ;

6. ຊຸກຍູ້, ສົ່ງເສີມ ແລະ ມີສ່ວນຮ່ວມໃນການ ກໍ່ສ້າງ, ປົກປັກຮັກສາ ແລະ ບູລະນະໂຮງຮຽນ;

7. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານສາມັນສຶກສາ ຕໍ່ຫ້ອງການສຶກສາທິການ ແລະ ກິລາ ຂັ້ນເມືອງ ແລະ ຕໍ່ຄະນະກຳມະການປົກຄອງບ້ານ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 94 ສິດ ແລະ ໜ້າທີ່ ຂອງສະຖານສາມັນສຶກສາ

ໃນການຄຸ້ມຄອງວຽກງານສາມັນສຶກສາ ສະຖານສາມັນສຶກສາ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ລະບຽບການ ກ່ຽວກັບວຽກງານສາມັນສຶກສາ;

2. ອອກກົດລະບຽບ ກ່ຽວກັບການຄຸ້ມຄອງ ແລະ ບໍລິຫານ ສະຖານສາມັນສຶກສາ;

3. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ແລະ ກົດລະບຽບຂອງສະຖານສາມັນສຶກສາ ໃຫ້ ພໍ່ ແມ່ ຫຼື ຜູ້ປົກຄອງຂອງນັກຮຽນ;

4. ຈັດຕັ້ງການຮຽນ ການສອນ ໃຫ້ມີຄຸນນະພາບ, ຄົບເນື້ອໃນຫຼັກສູດຕາມ ສາມລັກສະນະ ຫ້າຫຼັກມູນຂອງການສຶກສາ ແລະ ຍັ້ງຢືນການສຶກສາ ຕາມຊັ້ນຂອງຜູ້ຮຽນ;

5. ຈັດຕັ້ງການປະເມີນຕົນເອງ, ວາງແຜນພັດທະນາສະຖານສາມັນສຶກສາ, ພັດທະນາ ການຮຽນການສອນ, ຄູ ແລະ ບຸກຄະລາກອນ ສາມັນສຶກສາ ໃຫ້ມີຄຸນນະພາບ;

6. ຄຸ້ມຄອງ ແລະ ປັບປຸງ ການຈັດຕັ້ງຂອງຕົນ ໃຫ້ເຂັ້ມແຂງ, ມີປະສິດທິພາບ ແລະ ປະສິດທິຜົນ;

7. ຄຸ້ມຄອງ, ນຳໃຊ້, ປົກປັກຮັກສາ, ສ້ອມແປງອາຄານ, ສະຖານທີ່, ວັດຖຸປະກອນ, ສື່ການຮຽນການສອນ ແລະ ສິ່ງອຳນວຍຄວາມສະດວກ ຕາມລະບຽບການ;

8. ເກັບ ແລະ ຄຸ້ມຄອງ ຄ່າບໍລິການ ແລະ ຄ່າຮຽນ ຕາມກົດໝາຍ ແລະ ລະບຽບການ;

9. ພິຈາລະນາການ ຮັບ ແລະ ບັນຈຸ ຄູ, ບຸກຄະລາກອນ ສາມັນສຶກສາ ແລະ ນັກຮຽນ ຕາມລະບຽບການ;

10. ຍ້ອງຍໍ ແລະ ລົງວິໄນຕໍ່ ຄູ, ບຸກຄະລາກອນ ສາມັນສຶກສາ ແລະ ນັກຮຽນ ຕາມລະບຽບການ;

11. ຮັບປະກັນການປະຕິບັດສິດສະເໝີພາບຂອງນັກຮຽນ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຄູ, ບຸກຄະລາກອນ ສາມັນສຶກສາ ແລະ ນັກຮຽນ;

12. ຕ້ານ, ສະກັດກັ້ນປາກົດການຫຍໍ້ທໍ້, ສ້າງສະພາບແວດລ້ອມທີ່ດີ, ປອດໄພ, ອະນຸລັກ, ປົກປັກຮັກສາ ແລະ ສົ່ງເສີມ ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງ ຊາດ, ທ້ອງຖິ່ນ;

13. ປະສານສົມທົບ ແລະ ຮ່ວມມືກັບ ອົງການປົກຄອງທ້ອງຖິ່ນ, ການຈັດຕັ້ງສັງຄົມ, ຊຸມຊົນ, ຜູ້ປົກຄອງ, ສະມາຄົມ ພໍ່ ແມ່ ນັກຮຽນ, ຄະນະພັດທະນາການສຶກສາ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ

14. ຕິດຕາມ, ປະເມີນຜົນວຽກງານສາມັນສຶກສາ, ສະຫຼຸບ ແລະ ລາຍງານຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

15. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 95 ສິດ ແລະ ໜ້າທີ່ ຂອງອົງການ, ຂະແໜງການ, ຄະນະພັດທະນາການສຶກສາ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ

ໃນການຄຸ້ມຄອງວຽກງານສາມັນສຶກສາ ອົງການ, ຂະແໜງການ, ຄະນະພັດທະນາການສຶກສາ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ໃຫ້ການຮ່ວມມືກັບຂະແໜງການສຶກສາທິການ ແລະ ກິລາ ຂັ້ນຂອງຕົນ ໃນການສ້າງແຜນ, ແບ່ງງົບປະມານ, ລົງທຶນ, ກໍ່ສ້າງໂຄງລ່າງພື້ນຖານ, ຈັດຫາ ແລະ ປົກປັກຮັກສາ ສະຖານສາມັນສຶກສາ, ວັດຖຸປະກອນ, ຊ່ວຍເຫຼືອ, ອໍານວຍຄວາມສະດວກ, ຕິດຕາມ ແລະ ປະເມີນຜົນ ເພື່ອໃຫ້ວຽກງານສາມັນສຶກສາ ມີຄຸນນະພາບ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານສາມັນສຶກສາ

### ມາດຕາ 96 ອົງການກວດກາວຽກງານສາມັນສຶກສາ

ອົງການກວດກາວຽກງານສາມັນສຶກສາ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສາມັນສຶກສາ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 89 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

### ມາດຕາ 97 ເນື້ອໃນການກວດກາ

ການກວດກາວຽກງານສາມັນສຶກສາ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສາມັນສຶກສາ;

2. ການຈັດຕັ້ງປະຕິບັດ ຫຼັກສູດສາມັນສຶກສາ;

3. ການປະຕິບັດ ພາລະບົດບາດ, ໜ້າທີ່ ແລະ ການນໍາໃຊ້ສິດ ຂອງຜູ້ບໍລິຫານໂຮງຮຽນ, ຄູ ແລະ ນັກຮຽນ ສາມັນສຶກສາ;

4. ຄວາມຮັບຜິດຊອບ, ການປະພຶດ ແລະ ແບບແຜນວິທີເຮັດວຽກຂອງຄູ ແລະ ບຸກຄະລາກອນສາມັນສຶກສາ;

5. ການເຄື່ອນໄຫວຂອງຜູ້ປະກອບການດ້ານການສຶກສາ;

6. ການນໍາໃຊ້ງົບປະມານ ແລະ ການເງິນ ຂອງສະຖານສາມັນສຶກສາ;

7. ການປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;

8. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈໍາເປັນ.

ມາດຕາ 98 ຮູບການການກວດກາ

ການກວດກາວຽກງານສາມັນສຶກສາ ມີສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນ ການກວດກາທີ່ດໍາເນີນຕາມແຜນການ ແລະ ມີກໍານົດເວລາອັນແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ກ່ອນລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການເມື່ອເຫັນວ່າ ມີຄວາມຈໍາເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດໍາເນີນການກວດກາວຽກງານສາມັນສຶກສານັ້ນ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ XIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 99 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 100 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ XIV
## ບົດບັນຍັດສຸດທ້າຍ

ມາດຕາ 101 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 102 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 1 ກັນຍາ 2025 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງ ລັດຖະການ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ